ຍໍພຣະອົງ ຖວາຍສາທຸການແດ່ພຣະນາມຂອງພຣະອົງຕລອດໄປເປັນນິດ

ຂ້າພຣະອົງຈະຖວາຍສາທຸການແດ່ພຣະອົງທຸກ ໆ ວັນ ສັຣເສີນ
ພຣະນາມຂອງພຣະອົງເປັນນິດ

ພຣະເຈົ້ານັ້ນຍິ່ງໃຫຍ່ແລະສົມຄວນທີ່ຈະສັຣເສີນຢ່າງຍິ່ງ ຄວາມຍິ່ງໃຫຍ່
ຂອງພຣະອົງນັ້ນເຫລືອຈະຢັ່ງຮູ້

ຄົນຊົ່ວອາຍຸນຶ່ງຈະສັຣເສີນພຣະຣາຊກິດຂອງພຣະອົງໃຫ້ຄົນອີກ
ຊົ່ວອາຍຸນຶ່ງຟັງ ແລະປະກາດກິຈການອັນຊົງອານຸພາບ
ຂອງພຣະອົງ

ຂ້າພຣະອົງຈະພາວະນາເຖິງສະງ່າຣາສີອັນຮຸ່ງເຮືອງຂອງຄວາມສູງ
ຍິ່ງຂອງພຣະອົງ ແລະເຖິງພຣະຣາຊກິດອັສຈັນຂອງພຣະອົງ

ມະນຸດຈະກ່າວເຖິງອານຸພາບແຫ່ງກິຈການອັນໜ້າຢ້ານຂອງ
ພຣະອົງ ແລະຂ້າພຣະອົງຈະເລົ່າເຖິງຄວາມຍິ່ງໃຫຍ່
ຂອງພຣະອົງ

ເຂົາທັງຫຼາຍຈະໂຄສະນາຂ່າວເລົ່າລືເຖິງຄຸນຄວາມດີອັນອຸດົມຂອງພຣະອົງອອກມາ ແລະຈະຮ້ອງເພງເຖິງຄວາມຊອບທັມຂອງພຣະອົງ

ພຣະເຈົ້າຊົງພຣະເມດຕາກະຣຸນາ ຊົງພິໂຣດຊ້າໆ ແລະມີຄວາມຮັກໝັ້ນຄົງຢ່າງອຸດົມ

ພຣະເຈົ້າຊົງດີຕໍ່ໝູ່ຄົນ ແລະຄວາມຮັກເອັນດູຂອງພຣະອົງມີຢູ່ເໜືອພຣະຣາຊກິດທັງສິ້ນຂອງພຣະອົງ

ຂ້າແດ່ພຣະເຈົ້າ ພຣະຣາຊກິດທັງສິ້ນຂອງພຣະອົງຈະຖວາຍໂມທະນາຂອບພຣະຄຸນພຣະອົງ ແລະໄພ່ພົນທັງສິ້ນຂອງພຣະອົງຈະຖວາຍສາທຸແດ່ພຣະອົງ

ຣາຊອານາຈັກຂອງພຣະອົງເປັນຣາຊອານາຈັກອັນຕລອດໄປ ແລະຣາຊແຜ່ນດິນຂອງພຣະອົງດຳຣົງຢູ່ຕລອດທຸກຊົ່ວຊາດມະນຸດ 'ພຣະເຈົ້າຊົງສັດຊື່ຕາມພຣະຄຳທັງສິ້ນຂອງພຣະອົງ ແລະຊົງພຣະເມດຕາຕາມກິຈການທັງສິ້ນຂອງພຣະອົງ'

ພຣະເຈົ້າຊົງຊ່ວຍຊູທຸກຄົນທີ່ກຳລັງຈະລົ້ມລົງ ແລະຊົງຍົກທຸກຄົນທີ່ນ້ອມຕົວລົງໃຫ້ລຸກຂຶ້ນ

ລູກຕາທັງປວງມອງເບິ່ງພຣະອົງ ແລະພຣະອົງປະທານອາຫານໃຫ້ຕາມເວລາ

ພຣະອົງຊົງຍື່ນພຣະຫັດຂອງພຣະອົງ ພຣະອົງຊົງໃຫ້ສັດໂລກທຸກຢ່າງອີ່ມຕາມຄວາມປາຖນາ

ພຣະເຈົ້າຊົງຊອບທັມຕາມທາງທັງສິ້ນຂອງພຣະອົງ ແລະຊົງເອັນດູໃນການເຮັດທັງສິ້ນຂອງພຣະອົງ ພຣະເຈົ້າຊົງສະຖິດໃກ້ທຸກຄົນທີ່ຮ້ອງທູນພຣະອົງ ທຸກຄົນທີ່ຮ້ອງທູນພຣະອົງດ້ວຍໃຈຈິງ

ພຣະອົງຊົງໂຜດຄວາມປາຖນາຂອງບັນດາຜູ້ທີ່ຢຳເກງພຣະອົງ ພຣະອົງຊົງຟັງສຽງຮ້ອງທູນຂອງເຂົາດ້ວຍ ແລະຊົງໂຜດເຂົາໃຫ້ພົ້ນ

ພຣະເຈົ້າຊົງສງວນທຸກຄົນທີ່ຮັກພຣະອົງໄວ້ ແຕ່ບັນດາຄົນອະທັມ
ພຣະອົງຈະຊົງທຳລາຍ

ປາກຂອງຂ້າພະເຈົ້າຈະກ່າວສັຣເສີນພຣະເຈົ້າ ແລະໃຫ້ບັນດາ
ເນື້ອກາຍທັງສິ້ນ ຖວາຍສາທຸການແດ່ພຣະນາມບໍຣິສຸດຂອງ
ພຣະອົງຕລອດໄປເປັນນິດ.

(ເພງສັຣເສີນ ບົດ ທີ ໑໔໕:໑-໑໐, ໑໗-໒໑)

## ໓໕໔ ພຣະເຈົ້າຊົງເປັນພຣະມະຫາກະສັດ 354

ຈິດໃຈຂອງຂ້າເອີຍ ຈົ່ງຖວາຍສາທຸການແດ່ພຣະອົງ "ຂ້າແດ່ພຣະ
ເຈົ້າຂອງຂ້າພຣະອົງ ພຣະອົງຍິ່ງໃຫຍ່ຫລາຍ ພຣະອົງຊົງກຽດແລະ
ຄວາມສູງຍິ່ງເປັນເຄື່ອງທົງຂອງພຣະອົງ

ຜູ້ຊົງຄຸມພຣະອົງດ້ວຍແສງສວ່າງເໝືອນເຄື່ອງທົງຂອງພຣະອົງ
ຜູ້ຊົງກາງຟ້າສວັນອອກ ດັ່ງກາງຜ້າກັ້ງ

ຜູ້ຊົງວາງຄານຂອງທີ່ປະທັບອັນສູງຂອງພຣະອົງໄວ້ໃນນ້ຳ ຜູ້ຊົງໃຊ້
ເມກເປັນຣາຊຣົດ ຜູ້ຊົງປະທັບໄປເທິງປີກຂອງລົມ

ຜູ້ຊົງໃຊ້ລົມເປັນທູດສື່ສານຂອງພຣະອົງ ໄຟແລະແປວໄຟເປັນ
ຜູ້ຮັບໃຊ້ຂອງພຣະອົງ

ພຣະອົງຊົງຕັ້ງແຜ່ນດິນໂລກໄວ້ເທິງຮາກຖານຂອງມັນ ເພື່ອບໍ່ໃຫ້ມັນ
ຫວັ່ນໄຫວເປັນນິດ

ພຣະອົງຊົງຖຸມມັນໄວ້ດ້ວຍນ້ຳເລິກ ຢ່າງດ້ວຍເຄື່ອງນຸ່ງຫົ່ມ
ນ້ຳຢູ່ເໜືອພູຜາ

ເມື່ອພຣະອົງຊົງຂນາບ ນ້ຳນັ້ນກໍໜີໄປ ພໍໄດ້ຍິນສຽງຟ້າຮ້ອງຂອງ
ພຣະອົງມັນກໍແລ່ນໄປ

ພູຜາພົ້ນຂຶ້ນມາ ຫວ່າງເຂົາຍຸບລົງໄປ ໄປຍັງບ່ອນຊຶ່ງພຣະອົງ
ຊົງກຳນົດໄວ້ໃຫ້ນ້ຳນັ້ນ

ພຣະອົງຊົງວາງຂອບເຂດບໍ່ໃຫ້ມັນຂ້າມ ເພື່ອບໍ່ໃຫ້ມັນຄຸມແຜ່ນດິນໂລກອີກ

ພຣະອົງກະທຳໃຫ້ນ້ຳພຸຂຶ້ນມາໃນຫວ່າງພູ ນ້ຳນັ້ນກໍໄຫຼໄປຫວ່າງພູ

(ເພງສັຣເສີນ ບົດ ທີ ໑໐໔:໑-໑໐)

ເບິ່ງແມ , ຄົນຊາດທັງຫຼາຍ ຈົ່ງຕົບມື ຈົ່ງໂຫ່ຮ້ອງຖວາຍພຣະເຈົ້າດ້ວຍ
ສຽງໄຊໂຍ

ເພາະພຣະເຈົ້າອົງຜູ້ສູງສຸດເປັນທີ່ໜ້າຢ້ານ ຊົງເປັນມະຫາຣາດ
ເໜືອແຜ່ນດິນໂລກທັງສິ້ນ

ພຣະອົງຊົງປາບຊົນຊາດທັງຫຼາຍໃຫ້ຢູ່ພາຍໃຕ້ເຮົາ ແລະຊາວປະເທດ
ທັງຫຼາຍໃຫ້ຢູ່ພາຍໃຕ້ຕີນຂອງເຮົາ

ພຣະອົງຊົງເລືອກມໍຣະດົກຂອງເຮົາໃຫ້ເຮົາ ເປັນສິ່ງພູມໃຈຂອງ
ຢາໂຄບທີ່ພຣະອົງຊົງຮັກ

ພຣະເຈົ້າສະເດັດຂຶ້ນດ້ວຍສຽງໂຫ່ຮ້ອງ ພຣະເຈົ້າສະເດັດຂຶ້ນດ້ວຍ
ສຽງແກ

ຈົ່ງຮ້ອງເພງສັຣເສີນຖວາຍພຣະເຈົ້າ ຈົ່ງຮ້ອງເພງສັຣເສີນເທີນ
ຈົ່ງຮ້ອງເພງສັຣເສີນຖວາຍມະຫາຣາຊາຂອງເຮົາ
ຈົ່ງຮ້ອງເພງສັຣເສີນເທີນ

ເພາະພຣະເຈົ້າຊົງເປັນພຣະຣາຊາເຫນືອແຜ່ນດິນໂລກທັງສິ້ນ ຈົ່ງຮ້ອງສັຣເສີນດ້ວຍເພງສັຣເສີນ

ພຣະເຈົ້າຊົງປົກຄອງນານາປະເທດ ພຣະເຈົ້າຊົງປະທັບເທິງ
ພຣະທີ່ນັ່ງບໍຣິສຸດຂອງພຣະອົງ

ບັນດາເຈົ້ານາຍຂອງຊົນຊາດທັງຫລາຍປະຊຸມກັນ ເປັນປະຊາກອນຂອງພຣະເຈົ້າຂອງອັບຣາຮາມ ເພາະບັນດາເຂນຂອງແຜ່ນດິນໂລກເປັນຂອງພຣະເຈົ້າ ພຣະອົງຊົງເປັນທີ່ຍົກຍ້ອງຢ່າງສູງ

(ເພງສັຣເສີນ ບົດ ທີ ໔໗)

## ໓໕໕ ຄວາມເມດຕາກະຣຸນາປານີ 355

ຂໍພຣະເຈົ້າຊົງພຣະເມດຕາຕໍ່ຂ້າພຣະອົງທັງຫລາຍ ແລະອຳນວຍພອນແກຂ້າພຣະອົງ ຂໍພຣະອົງຊົງໃຫ້ພຣະພັກແສງສວ່າງແກ່ຂ້າພຣະອົງ

ເພື່ອພຣະມັກຄາຂອງພຣະອົງຈະເປັນທີ່ຮູ້ຈັກໃນແຜ່ນດິນໂລກ
ຄວາມພົ້ນຂອງພຣະອົງຈະເປັນທີ່ຮູ້ຖ້າມກາງບັນດາປະຊາຊາດ
ທັງສິ້ນ

ຂ້າແດ່ພຣະເຈົ້າ ຂໍຊົນຊາດທັງຫລາຍສັຣເສີນພຣະອົງ ໃຫ້ຊົນຊາດທັງຫລາຍສັຣເສີນພຣະອົງ

ຂໍໃຫ້ຊາວປະເທດທັງຫລາຍຍິນດີແລະຮ້ອງເພງດ້ວຍຄວາມຊື່ນບານ
ເພາະພຣະອົງຊົງພິພາກສາຊົນຊາດທັງຫລາຍດ້ວຍຄວາມທ່ຽງທັມ
ແລະຊົງນຳຊາວປະເທດທັງຫລາຍໃນໂລກ

ຂ້າແດ່ພຣະເຈົ້າ ຂໍຊົນຊາດທັງຫລາຍສັຣເສີນພຣະອົງ ໃຫ້ຊົນຊາດທັງຫລາຍສັຣເສີນພຣະອົງ

**ແຜ່ນດິນໂລກທີ່ເກີດຜົນ ພຣະເຈົ້າຄືພຣະເຈົ້າຂອງເຮົາ ຊົງອຳນວຍພຣະພອນແກ່ເຮົາ**

ພຣະເຈົ້າຊົງອວຍພຣະພອນແກ່ເຮົາແລ້ວ ໃຫ້ທີ່ສຸດປາຍແຜ່ນດິນໂລກຢຳເກງພຣະອົງ

**ຂ້າແດ່ພຣະເຈົ້າ ຂໍຊົງພຣະກະຣຸນາຕໍ່ຂ້າພຣະອົງ ຂໍຊົງພຣະກະຣຸນາຕໍ່ຂ້າພຣະອົງ ເພາະຈິດວິນຍານຂອງຂ້າພຣະອົງລີ້ພັຍຢູ່ໃນພຣະອົງ ຂ້າພຣະອົງລີ້ພັຍຢູ່ໃຕ້ຮົ່ມປີກຂອງພຣະອົງ ຈົນກວ່າພັຍອັນຕະຣາຍຈະຜ່ານພົ້ນໄປ**

ຂ້າພະເຈົ້າຮ້ອງທູນຕໍ່ພຣະເຈົ້າອົງສູງສຸດ ຕໍ່ພຣະເຈົ້າຜູ້ຊົງກະທຳການໃຫ້ສຳເຣັດເພື່ອຂ້າພະເຈົ້າ

**ພຣະອົງຈະຊົງໃຊ້ມາຈາກຟ້າສວັນແລະໂຜດຂ້າພະເຈົ້າໃຫ້ພົ້ນ ພຣະອົງຈະຊົງໃຫ້ຜູ້ຢຽບຢ່ຳຂ້າພະເຈົ້າໄດ້ອາຍ ພຣະເຈົ້າຈະຊົງໃຊ້ຄວາມໝັ້ນຄົງແລະຄວາມສັດສູຈຣິດລົງມາ**

ຂ້າພະເຈົ້າຢູ່ທ່າມກາງຝູງສິງຫະຣາດ ຂ້າພະເຈົ້ານອນທ່າມກາງຜູ້ທີ່ໄຟຕິດຕົວຄືບຸດຂອງມະນຸດ ແຂ້ວຂອງເຂົາທັງຫລາຍຄືຫອກແລະລູກສອນ ລີ້ນຂອງເຂົາຄືດາບຄົມ

**ຂ້າແດ່ພຣະເຈົ້າ ຂໍຊົງເປັນທີ່ຍົກຍ້ອງເໜືອຟ້າສວັນ ຂໍພຣະສະງ່າຣາສີຂອງພຣະອົງຢູ່ທົ່ວແຜ່ນດິນໂລກ**

ເຂົາທັງຫລາຍວາງຕາໜ່າງດັກຕີນຂ້າພະເຈົ້າ ຈິດໃຈຂອງຂ້າພະເຈົ້າໄດ້ກົ້ມລົງ ເຂົາຂຸດຂຸມໄວ້ໃນທາງຂ້າພະເຈົ້າ ແຕ່ເຂົາກໍຕົກລົງເອງ

ຂ້າແດ່ພຣະເຈົ້າ ຈິດໃຈຂອງຂ້າພຣະອົງໝັ້ນຄົງ ຂ້າພຣະອົງຈະຮອງເພງ ຂ້າພຣະອົງຈະຮອງເພງສັຣເສີນ

ຈິດໃຈຂອງຂ້າພະເຈົ້າເອີຍ ຈົ່ງຕື່ນເຖີນ ພິນໃຫຍ່ແລະພິນເຂົາຄູ່ເອີຍ ຈົ່ງຕື່ນເທີນ ຂ້າພະເຈົ້າຈະປຸກຮຸ່ງເຊົ້າ

ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂ້າພຣະອົງຈະຖວາຍໂມທະນາພຣະຄຸນພຣະອົງຖ່າມກາງປະຊາຊາດ ຂ້າພຣະອົງຈະຮ້ອງເພງສັຣເສີນພຣະອົງຖ່າມກາງຊົນຊາດທັງຫຼາຍ

ເພາະຄວາມຮັກໝັ້ນຄົງຂອງພຣະອົງຍິ່ງໃຫຍ່ເຖິງຟ້າສວັນ ຄວາມສັດສຸຈຣິດຂອງພຣະອົງສູງເຖິງເມກ

ຂ້າແດ່ພຣະເຈົ້າ ຂໍຊົງເປັນທີ່ເຊີດຊູເໜືອຟ້າສວັນ ຂໍພຣະສະງ່າຣາສີຂອງພຣະອົງຢູ່ທົ່ວແຜ່ນດິນໂລກ

(ເພງສັຣເສີນ ບົດ ທີ ໕໗)

ໞ໕໖ ພຣະເຈົ້າຊົງຄູ້ມຄອງ 356

ຜູ້ທີ່ອາສັຍຢູ່ບ່ອນບັງລັບຂອງພຣະເຈົ້າຜູ້ສູງສຸດ ຜູ້ຢູ່ໃນຮົ່ມເງົາຂອງຜູ້ຊົງມະຫິດທິຣິດ

ຈະທູນພຣະເຈົ້າວ່າ "ທີ່ລີ້ພັຍຂອງຂ້າພຣະອົງແລະປ້ອມຮັກສາການຂອງຂ້າພຣະອົງ ພຣະເຈົ້າຂອງຂ້າພຣະອົງ ຜູ້ທີ່ຂ້າພຣະອົງໄວ້ວາງໃຈ

ເພາະພຣະອົງຊົງຊ່ອຍກູ້ຕົວທ່ານຈາກແຮ້ວຂອງພານຮຽກນົກ ແລະຈາກພຍາດພັຍຢ່າງຮ້າຍແຮງນັ້ນ

ພຣະອົງຈະຊົງປົກທ່ານໄວ້ດ້ວຍປີກຂອງພຣະອົງ ແລະທ່ານຈະລີ້ພັຍຢູ່ໃຕ້ປີກຂອງພຣະອົງ ຄວາມສັດສຸຈຣິດຂອງພຣະອົງເປັນເຂນແລະເປັນດັ້ງ

ທ່ານຈະບໍ່ຢ້ານຄວາມສະທ້ານຫວັ່ນໄຫວໃນກາງຄືນ ຫຼືຢ້ານລູກສອນທີ່ບິນໄປໃນກາງເວັນ

ຫຼືພຍາດໂພຍພັຍທີ່ໄລ່ມາໃນຄວາມມືດ ຫຼືພຍາດຊຶ່ງທຳລາຍໃນທ່ຽງວັນ

ພັນຄົນຈະລົ້ມຢູ່ຂ້າງ ໆ ທ່ານ ຫມື່ນຄົນທີ່ມືຂວາຂອງທ່ານ ແຕ່ພັຍນັ້ນຈະບໍ່ມາໃກ້ທ່ານ

ທ່ານຈະເບິ່ງດ້ວຍຕາເທົ່ານັ້ນ ແລະຈະເຫັນການຕອບແທນແກ່ຄົນອະທັມ

ເພາະທ່ານໄດ້ເຮັດໃຫ້ພຣະເຈົ້າຜູ້ເປັນທີ່ລີ້ພັຍຂອງຂ້າພະເຈົ້າ ຄືອົງຜູ້ສູງສຸດເປັນທີ່ຢູ່ຂອງທ່ານ

ບໍ່ມີການຮ້າຍໃດ ໆ ຈະຕົກມາເຖິງທ່ານ ບໍ່ມີພັຍມາໃກ້ຜ້າເຕັນຂອງທ່ານ

ເພາະພຣະອົງຈະຊົງສັ່ງພວກເທວະດາຂອງພຣະອົງໃນເຣື່ອງທ່ານໃຫ້ລະມັດລະວັງທ່ານໃນທາງທັງປວງຂອງທ່ານ

ເຂົາທັງຫຼາຍຈະເອົາມືອູ້ມຊູທ່ານໄວ້ ຢ້ານວ່າຕີນຂອງທ່ານຈະຕຳຫີນ

ທ່ານຈະຢຽບໂຕສິງແລະງູເຫົ່າ ທ່ານຈະຢຽບໂຕສິງໜຸ່ມແລະງູ

ເພາະທ່ານຜູກພັນກັບເຮົາດ້ວຍຄວາມຮັກ ເຮົາຈະຊ່ອຍກູ້ທ່ານ
ເຮົາຈະປ້ອງກັນທ່ານໄວ້ ເພາະທ່ານຮູ້ຈັກນາມຂອງເຮົາ

ເມື່ອທ່ານຮ້ອງຫາເຮົາ ເຮົາຈະຕອບທ່ານ ເຮົາຈະຢູ່ກັບທ່ານໃນຍາມລຳບາກ ເຮົາຈະໂຜດທ່ານໃຫ້ພົ້ນແລະໃຫ້ກຽດທ່ານ

ເຮົາຈະໃຫ້ທ່ານອີ່ມໃຈດ້ວຍຊີວິດຍືນຍາວ ແລະສະແດງຄວາມພົ້ນ
ຂອງເຮົາແກ່ທ່ານ.

(ເພງສັລເສີນ ບົດ ທີ ໙໑)

## ໓໕໗ ການໄວ້ວາງໃຈໃນພຣະເຈົ້າ 357

ພຣະເຈົ້າຊົງເປັນຄວາມສວ່າງແລະຄວາມພົ້ນຂອງຂ້າພະເຈົ້າ ຂ້າພະເຈົ້າຈະຢ້ານຜູ້ໃດແດ່ ພຣະເຈົ້າຊົງເປັນທີ່ກຳບັງແຂງແຮງແຫ່ງຊີວິດຂ້າພະເຈົ້າ ຂ້າພະເຈົ້າຈະບໍ່ຕ້ອງຢ້ານໃຜ

ເມື່ອຄົນເຮັດຊົ່ວເຂົ້າມາຫາຂ້າພະເຈົ້າເພື່ອຈະກິນຊີ້ນຂ້າພະເຈົ້າ
ຄືຄູ່ສັດຕູແລະຄູ່ພິດຖຽງຂອງຂ້າພະເຈົ້າ ເຂົາຈະຊູນສະດຸດ
ແລະລົ້ມລົງ

ແມ່ນວ່າກອງທັບຕັ້ງຄ້າຍສູ້ຂ້າພະເຈົ້າ ຈິດໃຈຂອງຂ້າພະເຈົ້າຈະບໍ່ຢ້ານ ແມ່ນຂ້າພະເຈົ້າຈະໄດ້ຮັບພັຍສົງຄາມ ຂ້າພະເຈົ້າຍັງໄວ້ໃຈໄດ້ຢູ່

ຂ້າພະເຈົ້າທູນຂໍສິ່ງນຶ່ງຈາກພຣະເຈົ້າຊຶ່ງຂ້າພະເຈົ້າຈະສແວງຫາ
ສເມີ ຄືທີ່ຂ້າພະເຈົ້າຈະໄດ້ຢູ່ໃນພຣະຜາສາດຂອງພຣະເຈົ້າ
ຕລອດວັນເວລາຊົ່ວຊີວິດຂອງຂ້າພະເຈົ້າ ເພື່ອຈະເບິ່ງຄວາມງາມ
ຂອງພຣະເຈົ້າ ແລະເພື່ອຈະພິຈາຣະນາຢູ່ໃນພຣະວິຫານຂອງພຣະອົງ

ເພາະພຣະອົງຈະຊົງເຊື່ອງຂ້າພະເຈົ້າ ໃນທີ່ກໍາບັງຂອງພຣະອົງ ໃນຍາມຍາກລໍາບາກ  ພຣະອົງຈະອັດຂ້າພະເຈົ້າໄວ້ພາຍໃຕ້ສິ່ນພຣະສໍານັກຂອງພຣະອົງ  ພຣະອົງຈະຕັ້ງຂ້າພະເຈົ້າໄວ້ສູງເທິງສີລາ

ແລະບັດນີ້ຫົວຂອງຂ້າພະເຈົ້າຈະເງີຍຂຶ້ນເໜືອສັດຕູຂອງຂ້າພະເຈົ້າ
ທີ່ຢູ່ຮອບຂ້າງ ແລະຂ້າພະເຈົ້າຈະຖວາຍເຄື່ອງບູຊາໃນພຣະສໍານັກ
ຂອງພຣະອົງດ້ວຍການໂຫ່ຮ້ອງ ຂ້າພະເຈົ້າຈະຮ້ອງເພງແລະຖວາຍ
ເພງສັຣເສີນແດ່ພຣະເຈົ້າ

ຂ້າແດ່ພຣະເຈົ້າ  ຂໍຊົງຟັງເມື່ອຂ້າພຣະອົງຮ້ອງທູນຂໍ  ຂໍຊົງກະຣຸນາແລະຊົງກ່າວຕອບຂ້າພຣະອົງ

ພຣະອົງຊົງກ່າວແລ້ວວ່າ "ຈົ່ງຫາໜ້າຂອງເຮົາ" ຈິດໃຈຂອງ
ຂ້າພຣະອົງທູນພຣະອົງວ່າ "ຂ້າແດ່ພຣະເຈົ້າ ຂ້າພຣະອົງສແວງ
ພຣະພັກຂອງພຣະອົງ"

ຂໍຢ່າຊົງເຊື່ອງພຣະພັກຂອງພຣະອົງຈາກຂ້າພຣະອົງ  ຢ່າຂັບໄລ່ຜູ້ຮັບໃຊ້ຂອງພຣະອົງອອກໄປເສັຽດ້ວຍພຣະພິໂຣດ  ພຣະອົງຊົງເປັນຜູ້ອຸປຖັມຂອງຂ້າພຣະອົງ  ຂ້າແດ່ພຣະເຈົ້າແຫ່ງຄວາມພົ້ນຂອງຂ້າພຣະອົງ ຂໍຢ່າຊົງຖິ້ມຂ້າພຣະອົງຫຼືສລະຂ້າພຣະອົງເສັຽ

ແມ່ນວ່າບິດາແລະມານດາຂອງຂ້າພຣະອົງປະຖິ້ມຂ້າພຣະອົງ  ແຕ່
ພຣະເຈົ້າຈະຊົງຍົກຂ້າພຣະອົງຂຶ້ນ

ຂ້າແດ່ພຣະເຈົ້າ  ຂໍສອນທາງເດີນຂອງພຣະອົງແກ່ຂ້າພຣະອົງ  ແລະຊົງນໍາຂ້າພຣະອົງໄປເທິງທາງຮາບ  ເຫດດ້ວຍສັດຕູຂອງຂ້າພຣະອົງ

ຂໍຢ່າຊົງມອບຂ້າພຣະອົງໄວ້ກັບສັດຕູໃຫ້ເຂົາເຮັດຕາມໃຈຊອບ
ເພາະພຍານບໍ່ຈິງໄດ້ລຸກຂຶ້ນສູ້ຂ້າພຣະອົງ ແລະເຂົາຫາຍໃຈອອກມາ
ເປັນຄວາມໂຫດຮ້າຍ

ຂ້າພະເຈົ້າເຊື່ອແນ່ວ່າ ຂ້າພະເຈົ້າຈະເຫັນພຣະຄຸນຂອງພຣະເຈົ້າ ໃນບ່ອນແຜ່ນດິນຂອງຄົນເປັນ

> ຈົ່ງຄອຍຖ້າພຣະເຈົ້າ ຈົ່ງແຂງແຮງແລະໃຫ້ຈິດໃຈຂອງທ່ານກ້າຫານ
> ເທີນ ໂອ ຈົ່ງຄອຍຖ້າພຣະເຈົ້າ

(ເພງສັນລະເສີນ ບົດ ທີ ໒໗)



## ພຣະເຈົ້າຊົງເປັນທີ່ປ້ອງກັນຮັກສາ

ຂ້າແດ່ພຣະເຈົ້າ ຄືພຣະກຳລັງຂອງຂ້າພຣະອົງ ຂ້າພຣະອົງຮັກພຣະອົງ

> ພຣະເຈົ້າຊົງເປັນສີລາ ປ້ອມຮັກສາ ແລະຜູ້ຊ່ອຍກູ້ຂອງຂ້າພຣະອົງ
> ເປັນພຣະເຈົ້າຂອງຂ້າພຣະອົງ ເປັນສີລາຊຶ່ງຂ້າພຣະອົງເຂົ້າລີ້ພັຍ
> ພຣະອົງຊົງເປັນເຂນ ເປັນກຳລັງແຫ່ງຄວາມພົ້ນຂອງຂ້າພຣະອົງ
> ເປັນທີ່ກຳບັງແຂງແຮງຂອງຂ້າພຣະອົງ

ຂ້າພຣະອົງຮ້ອງທູນຕໍ່ພຣະເຈົ້າຜູ້ຊົງສົມຄວນແກ່ການສັນລະເສີນ ແລະຂ້າພຣະອົງໄດ້ຮັບການໂຜດ ໃຫ້ພົ້ນຈາກສັດຕູຂອງຂ້າພຣະອົງ

> ສາຍມັດງູຣາດລ້ອມຂ້າພຣະອົງໄວ້ ກະແສແຫ່ງຄວາມຕາຍມະ
> ຖ້ວມທັບຂ້າພຣະອົງ

ສາຍໃຈຂອງແດນມໍຣະນາພັນພົວຂ້າພຣະອົງ ແຮ້ວມັດງູຣາດປະທະຂ້າພຣະອົງ

ໃນຍາມທຸກລຳບາກໃຈ ຂ້າພະເຈົ້າຮ້ອງທູນຕໍ່ພຣະເຈົ້າ ຂ້າພະເຈົ້າ
ຮ້ອງທູນຂໍຄວາມຊ່ອຍເຫລືອຈາກພຣະເຈົ້າຂອງຂ້າພະເຈົ້າ ຈາກ
ພຣະວິຫານຂອງພຣະອົງພຣະອົງຊົງສະດັບຟັງສຽງຂອງຂ້າພະເຈົ້າ
ແລະສຽງຮ້ອງຂອງຂ້າພຣະອົງໄດ້ຍິນໄປເຖິງພຣະກັນຂອງພຣະອົງ

ພຣະອົງຊົງໂຜດຂ້າພະເຈົ້າໃຫ້ພົ້ນຈາກສັດຕູແຂງແຮງຂອງຂ້າພະເຈົ້າ
ແລະຈາກບັນດາຜູ້ທີ່ກຽດຊັງຂ້າພະເຈົ້າ ເພາະເຂົາມີອານຸພາບເກີນກວ່າ
ຂ້າພະເຈົ້າຫຼາຍ

ເຂົາປະທະຂ້າພະເຈົ້າໃນວັນທີ່ຂ້າພະເຈົ້າເກີດພັຍວິບັດ ແຕ່ພຣະເຈົ້າ
ຊົງເປັນທີ່ເພິ່ງຂອງຂ້າພະເຈົ້າ

ພຣະອົງຊົງນຳຂ້າພະເຈົ້າອອກມາຍັງທີ່ກວ້າງໃຫຍ່ ແລະຊົງຊ່ອຍກູ້ຂ້າພະເຈົ້າ
ໄວ້ ເພາະພຣະອົງຊົງຊົມຊື່ນຍິນດີໃນຂ້າພະເຈົ້າ

(ເພງສັຣເສີນ ບົດ ທີ ໑໘:໑-໖, ໑໗-໑໙)

ພຣະເຈົ້າຊົງເປັນທີ່ລີ້ພັຍແລະເປັນກຳລັງຂອງຂ້າພຣະອົງທັງຫຼາຍ
ເປັນຄວາມຊ່ອຍເຫລືອທີ່ພ້ອມຢູ່ໃນຍາມຍາກລຳບາກ

ສັນນັ້ນເຮົາຈະບໍ່ຢ້ານ ແມ່ນວ່າແຜ່ນດິນໂລກຈະປ່ຽນແປງໄປ ແມ່ນວ່າ
ພູຜາທັງຫຼາຍຈະສລາຍລົງສູ່ທ້ອງທະເລ

ແມ່ນວ່ານ້ຳທະເລຕີຟອງແລະຟອງຕີຂຶ້ນ ແມ່ນວ່າພູຜາສັ່ນສະເທືອນ
ເພາະທະເລຕີຟອງນັ້ນ

ມີນ້ຳສາຍນຶ່ງ ທີ່ເປັນຄອງອ່ອຍນ້ຳ ເຮັດໃຫ້ພຣະມະຫານະຄອນຂອງພຣະເຈົ້າ
ຍິນດີ ຄືທີ່ປະທັບບໍຣິສຸດຂອງພຣະເຈົ້າຜູ້ສູງສຸດ

ພຣະເຈົ້າຊົງສະຖິດກາງພຣະມະຫານະຄອນ ມັນຈະບໍ່ຫວັ່ນໄຫວຍ້າຍໄປ
ພໍຮຸ່ງເຊົ້າ ພຣະເຈົ້າກໍຊົງຊ່ອຍມັນໄວ້

ບັນດາປະຊາຊາດກໍຫວຸ້ນວາຍ ແລະຣາຊອານາຈັກທັງຫລາຍກໍຄອນແຄນ ພຣະອົງຊົງຮ້ອງພຣະສຸຣະສຽງ ແຜ່ນດິນໂລກກໍສລາຍໄປ

ພຣະເຈົ້າຈອມພົນສະຖິດກັບເຮົາທັງຫຼາຍ ພຣະເຈົ້າຂອງຢາໂຄບຊົງ
ເປັນບ່ອນລີ້ພັຍຂອງເຮົາ

ມາເທີນ ມາເບິ່ງພຣະຣາຊກິດຂອງພຣະເຈົ້າ ວ່າພຣະອົງຊົງກະທຳໃຫ້ຫວ່າງເປົ່າໃນແຜ່ນດິນໂລກຢ່າງໃດ

ພຣະອົງຊົງໃຫ້ເສິກເສືອສງົບເຖິງທີ່ສຸດປາຍຂອງແຜ່ນດິນໂລກ
ພຣະອົງຊົງຫັກຄັນສອນແລະຟັນຫອກເສັຽ ພຣະອົງຊົງເຜົາຣົດຮົບ
ອີກດ້ວຍໄຟ

"ຈົ່ງມິດຢູ່ ແລະຮູ້ເທີນວ່າເຮົາຄືພຣະເຈົ້າ ເຮົາເປັນທີ່ຍົກຍ້ອງທ່າມກາງປະຊາຊາດ ເຮົາເປັນທີ່ຍົກຍ້ອງໃນແຜ່ນດິນໂລກ"

(ເພງສັຣເສີນ ບົດ ທີ ໔໖)



## ຄຳສາຣະພາບຮັບຜິດ



ຂ້າແດ່ພຣະເຈົ້າ ຂໍຊົງສະແດງພຣະກະຣຸນາຕໍ່ຂ້າພຣະອົງ ຕາມຄວາມຮັກໝັ້ນຄົງຂອງພຣະອົງ ຂໍຊົງລຶບການທໍຣະຍົດຂອງຂ້າພຣະອົງອອກໄປຕາມແຕ່ພຣະກະຣຸນາອັນອຸດົມຂອງພຣະອົງ

ຂໍຊົງລ້າງຂ້າພຣະອົງຈາກຄວາມຜິດບາບໃຫ້ໝົດສິ້ນ ແລະຊົງຊຳຣະຂ້າ
ພຣະອົງຈາກບາບຂອງຂ້າພຣະອົງ

ເພາະຂ້າພຣະອົງຊາບເຖິງການລະເມີດຂອງຂ້າພຣະອົງແລ້ວ ແລະບາບຂອງຂ້າພຣະອົງຢູ່ຕໍ່ໜ້າຂ້າພຣະອົງເສມີ

ຂ້າພຣະອົງໄດ້ເຮັດບາບຕໍ່ພຣະອົງ ຕໍ່ພຣະອົງເທົ່ານັ້ນ ແລະໄດ້ກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະອົງ ການນີ້ກໍເພື່ອພຣະອົງຈະຊົງຍຸດຕິທັມໃນຄຳພິພາກສາ ແລະໄຮ້ຕຳໜິໃນການພິພາກສານັ້ນ

ເບິ່ງແມ ຂ້າພຣະອົງຖືກກຳເນີດມາໃນຖານະເປັນຄົນຜິດບາບ ແລະຂ້າພຣະອົງໄດ້ເກີດໃນທ້ອງຂອງມານດາຜູ້ຜິດບາບ

ເບິ່ງແມ ພຣະອົງມີພຣະປະສົງຄວາມຈິງພາຍໃນ ເພາະສັນນັ້ນຂໍຊົງສອນສະຕິປັນຍາແກ່ຂ້າພຣະອົງພາຍໃນຈິດໃຈເລິກລັບຂອງຂ້າພຣະອົງ

ຂໍຊົງຊຳຣະຂ້າພຣະອົງດ້ວຍຕົ້ນຫູສົບ ຂ້າພຣະອົງຈຶ່ງສະອາດ ຂໍຊົງລ້າງຂ້າພຣະອົງ ແລະຂ້າພຣະອົງຈະຂາວກວ່າຫິມະ

ຂໍຊົງໂຜດໃຫ້ຂ້າພຣະອົງໄດ້ຍິນຄວາມຊື່ນບານແລະຄວາມຍິນດີ ຂໍໃຫ້ກະດູກຊຶ່ງພຣະອົງຊົງຫັກນັ້ນປິຕິຍິນດີ

ຂໍຊົງປິ່ນພຣະພັກພຣະອົງຈາກບາບທັງຫຼາຍຂອງຂ້າພຣະອົງເສັຽ ແລະຊົງລຶບບັນດາຄວາມຜິດບາບຂອງຂ້າພຣະອົງໃຫ້ໝົດສິ້ນ

ຂ້າແດ່ພຣະເຈົ້າ ຂໍຊົງລ້າງໃຈສະອາດພາຍໃນຂ້າພຣະອົງ ແລະພື້ນນ້ຳໃຈທີ່ໝັ້ນແໜ້ນຂຶ້ນໃໝ່ພາຍໃນຂ້າພຣະອົງ

ຂໍຢ່າຊົງຖິ້ມຂ້າພຣະອົງໄປເສັຽຈາກເບື້ອງພຣະພັກພຣະອົງ ແລະຂໍຢ່າຊົງ
ນຳວິນຍານບໍຣິສຸດຂອງພຣະອົງໄປຈາກຂ້າພຣະອົງ

    ຂໍຊົງຄືນຄວາມຊື່ນບານໃນຄວາມພົ້ນແກ່ຂ້າພຣະອົງ ແລະຊູຂ້າ
    ພຣະອົງໄວ້ດ້ວຍເຕັມພຣະທັຍ

ແລ້ວຂ້າພຣະອົງຈະສອນຜູ້ລະເມີດທັງຫລາຍເຖິງບັນດາພຣະມັກຄາຂອງ
ພຣະອົງ ແລະຄົນບາບທັງຫລາຍຈະຄືນສູ່ພຣະອົງ

    ຂ້າແດ່ພຣະເຈົ້າ ຄືພຣະເຈົ້າແຫ່ງຄວາມພົ້ນຂອງຂ້າພຣະອົງ
    ຂໍຊົງຊ່ອຍກູ້ຂ້າພຣະອົງ ໃຫ້ພົ້ນຈາກກັມຊົ່ວເພາະເຮົາໃຫ້ໂລຫິດ
    ເຂົາຕົກ ແລະລີ້ນຂອງຂ້າພຣະອົງຈະຮ້ອງເພງເຣື່ອງການຊ່ອຍກູ້
    ຂອງພຣະອົງ

ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂໍຊົງເບີກຮີມສົບຂອງຂ້າພຣະອົງ ແລະປາກ
ຂອງຂ້າພຣະອົງຈະສະແດງການສັຣເສີນພຣະອົງ

    ເພາະພຣະອົງບໍ່ໄດ້ຊົງປິຕິຍິນດີໃນເຄື່ອງບູຊາ ແມ່ນວ່າຂ້າພຣະອົງ
    ຈະຖວາຍເຄື່ອງເຜົາບູຊາ ພຣະອົງຈະບໍ່ໄດ້ພໍພຣະທັຍ

ເຄື່ອງບູຊາທີ່ພຣະເຈົ້າຊົງຮັບໄດ້ຄືຈິດໃຈທີ່ບອບຊ້ຳ ຈິດໃຈທີ່ສຳນຶກຜິດ
ແລະຊອບແລະບອບຊ້ຳນັ້ນ ຂ້າແດ່ພຣະເຈົ້າ ພຣະອົງບໍ່ໄດ້ຊົງດູຖູກ

    ຂໍຊົງເຮັດດີແກ່ຊີໂອນ ຕາມພຣະຣາຊກະຣຸນາຂອງພຣະອົງ
    ຂໍຊົງສ້າງກຳແພງເຢຣູຊາເລັມ

ແລ້ວພຣະອົງຈະຊົງປິຕິຍິນດີໃນເຄື່ອງບູຊາທີ່ຖືກຕ້ອງ ໃນເຄື່ອງບູຊາ ແລະໃນເຄື່ອງເຜົາບູຊາທັງຕົວ ແລ້ວເຂົາຈະຖວາຍງົວເຖິກເທິງແທ່ນບູຊາຂອງພຣະອົງ

(ເພງສັຣເສີນ ບົດ ທີ ໕໑)



ເພາະໃດບັນດາປະຊາຊາດຈຶ່ງຄຶດກະບົດ ເປັນຫຍັງຊົນຊາດທັງຫລາຍ ປອງຮ້າຍກັນລ້າ ໆ

ຂໍທ່ານປົກຄອງຈາກທະເລເຖິງທະເລ ແລະຈາກແມ່ນ້ຳເຖິງທີ່ສຸດປາຍແຜ່ນດິນໂລກ

"ໃຫ້ເຮົາຕັດສາຍແອກໃຫ້ຂາດສະບັ້ນ ແລະກຳຈັດບ້ວງຫຽນຂອງເຂົາໃຫ້ພົ້ນຈາກເຮົາ"

ພຣະອົງຜູ້ປະທັບໃນສວັນຊົງຫົວຂວັນ ພຣະເຈົ້າຊົງເຢີ້ຍເຂົາພວກນັ້ນ

ແລ້ວພຣະອົງຊົງກ່າວກັບເຂົາທັງຫລາຍດ້ວຍພຣະພິໂຣດ ແລະກະທຳໃຫ້ເຂົາສະທ້ານ ດ້ວຍຄວາມພິໂຣດຂອງພຣະອົງຊົງກ່າວວ່າ

"ເຮົາໄດ້ຕັ້ງກະສັດຂອງເຮົາໄວ້ແລ້ວເທິງຊີໂອນ ພູສັກສິດຂອງເຮົາ"

ຂ້າພະເຈົ້າຈະບອກເຖິງພຣະດຳຣັດຂອງພຣະເຈົ້າ ພຣະອົງຮັບສັ່ງກັບຂ້າພະເຈົ້າວ່າ "ເຈົ້າເປັນບຸດຂອງເຮົາ ວັນນີ້ເຮົາໄດ້ໃຫ້ກຳເນີດແກ່ເຈົ້າແລ້ວ"

"ຈົ່ງຂໍຈາກເຮົາ ແລະເຮົາຈະມອບບັນດາປະຊາຊາດໃຫ້ເປັນມໍຣະດົກຂອງເຈົ້າ ຕລອດທັງແຜ່ນດິນໂລກໃຫ້ເປັນກັມມະສິດຂອງເຈົ້າ"

"ເຈົ້າຈະຕີເຂົາໃຫ້ແຕກດ້ວຍຄ້ອນເຫຼັກ ແລະຟາດໃຫ້ຫມຸ່ນເປັນບົ້ງ ໆ ເຫມືອນເຄື່ອງແຕ່ງຂອງຊ່າງປັ້ນຫມໍ້"

ເພາະສັນນັ້ນ ຂ້າແດ່ກະສັດທັງຫຼາຍ ຈົ່ງສລາດສາ ຂ້າແດ່ນັກປົກຄອງແຫ່ງແຜ່ນດິນໂລກ ຈົ່ງຮັບຄຳເຕືອນສາ

ຈົ່ງປົວລະບັດພຣະເຈົ້າດ້ວຍຄວາມຢຳເກງ ດ້ວຍຕົວສັ່ນ

ຈົ່ງຖວາຍຄຳນັບດ້ວຍຈູບພຣະບາດ ຢ້ານວ່າພຣະອົງຈະຊົງພຣະພິໂຣດ ແລະທ່ານຈະວິນາດຈາກທາງນັ້ນ ເພາະພຣະພິໂຣດຂອງພຣະອົງນັ້ນຈູດໃຫ້ລຸກໄດ້ໄວ ໆ ຄວາມສຸກເປັນຂອງຄົນທັງຫຼາຍຜູ້ເຂົ້າມາລີ້ພັຍໃນພຣະອົງ.

(ເພງສັຣເສີນ ບົດ ທີ ໒)

ຂ້າແດ່ພຣະເຈົ້າ ຂໍປະທານຄວາມຍຸດຕິທັມຂອງພຣະອົງແກ່ພຣະຣາຊາ ແລະຄວາມຊອບທັມຂອງພຣະອົງແກ່ຣາຊໂອຣົດ

ເພື່ອທ່ານຈະໄດ້ພິພາກສາປະຊາກອນຂອງພຣະອົງ ດ້ວຍຄວາມຊອບທັມ ແລະຄົນຍາກຈົນຂອງພຣະອົງດ້ວຍຄວາມຍຸດຕິທັມ

ຂໍທ່ານສູ້ຄະດີຂອງປະຊາຊົນຜູ້ຍາກຈົນ ໃຫ້ການຊ່ອຍຍູ້ແກ່ລູກຫຼານ
ຂອງຄົນຂັດສົນແລະບົດຂີ້ຜູ້ບີບບັງຄັບ

ຂໍໃຫ້ທ່ານດຳຣົງຊີວິດຊື່ງເຫມືອນດວງຕາເວັນຄົງຢູ່ ຕາບເທົ່າດວງຈັນ
ຕລອດຊາດຊົ່ວອາຍຸ

ຂໍໃຫ້ທ່ານເປັນເຫມືອນຝົນທີ່ຕົກເທິງຫຍ້າທີ່ຕັດແລ້ວ ເຫມືອນຫ່າ
ຝົນທີ່ຕົກແຜ່ນດິນໂລກ

ໃນສມັຍຂອງທ່ານ ຂໍຄວາມຊອບທັມຈະເອີນຂຶ້ນ ແລະສັນຕິພາບອັນອຸດົມ
ຈົນບໍ່ມີດວງຈັນ

ບັນດາກະສັດແຫ່ງແຜ່ນດິນໂລກຕັ້ງຕົ້ນເອງຂຶ້ນ ແລະນັກປົກຄອງປຶກສາ
ກັນຕໍ່ສູ້ພຣະເຈົ້າແລະຜູ້ຮັບການທົດສົງຂອງພຣະອົງກ່າວວ່າ

ບັນດາຜູ້ທີ່ຢູ່ໃນຖິ່ນກັນດານຈະຂາບລົງຕໍ່ທ່ານ ແລະໃຫ້ບັນດາສັດຕູຂອງ
ທ່ານເລັຽຂີ້ຝຸ່ນ

ຂໍບັນດາພຣະຣາຊາແຫ່ງເມືອງທາຣະສິດຂອງເກາະທັງປວງ
ຖວາຍຣາຊບັນນາການ ຂໍບັນດາພຣະຣາຊາແຫ່ງເສບາແລະເຊບາ
ນຳຂອງຂວັນມາ
ຂໍພຣະຣາຊາທັງປວງຂາບລົງໃຫ້ທ່ານ ບັນດາປະຊາຊາດ ຈົ່ງປົວລະບັດ
ທ່ານ.

(ເພງສັຣເສີນ ບົດ ທີ ໗໒:໑-໑໑)

ພຣະເຈົ້າຂອງເຈົ້າຊົງກ່າວວ່າ, "ຈົ່ງເລົ້າໂລມ ຈົ່ງເລົ້າໂລມໄພ່ພົນຂອງເຮົາ

> ຈົ່ງເວົ້າກັບເຢຣູຊາເລັມຢ່າງເຫັນໃຈ ແລະຈົ່ງບອກເມືອງນັ້ນວ່າ ການເສິກເສືອຂອງມັນສິ້ນສຸດລົງແລ້ວ ແລະຄວາມຜິດບາບຂອງມັນກໍອະພັຍແລ້ວ ແລະໄດ້ຮັບໂທດຈາກພຣະຫັດຂອງພຣະເຈົ້າແລ້ວເປັນສອງທໍ່ຕໍ່ຄວາມຜິດຂອງມັນ."

(ເອຊາຢາ ບົດ ທີ ໔໐:໑, ໒)

ບັດນີ້ ພຣະເຈົ້າຜູ້ໄດ້ສ້າງເຈົ້າຄືຢາໂຄບ ພຣະອົງຜູ້ໄດ້ຊົງປັ້ນເຈົ້າຄືອິສຣາເອັນ ຊົງກ່າວດັ່ງນີ້ວ່າ, "ຢ່າຢ້ານເລີຍ ເພາະເຮົາໄດ້ໄຖ່ເຈົ້າແລ້ວ ເຮົາໄດ້ເອີ້ນເຈົ້າຕາມຊື່ ເຈົ້າເປັນຂອງເຮົາ

> ເມື່ອເຈົ້າລຸຍຂ້າມນ້ຳເຮົາຈະຢູ່ກັບເຈົ້າ ເມື່ອຂ້າມແມ່ນ້ຳ ນ້ຳຈະບໍ່ຖ້ວມ ເມື່ອເຈົ້າລຸຍໄຟ ເຈົ້າຈະບໍ່ໄໝ້ ແລະແປວໄຟຈະບໍ່ເຜົາຜານເຈົ້າ

ເພາະເຮົາເປັນພຣະຢາໂຮວາພຣະເຈົ້າຂອງເຈົ້າ ຜູ້ບໍຣິສຸດແຫ່ງອິສຣາເອັນຜູ້ໂຜດໃຫ້ພົ້ນຂອງເຈົ້າ ເຮົາໃຫ້ເອຢິບເປັນຄ່າໄຖ່ຂອງເຈົ້າ ໃຫ້ເອທິໂອເປັຽແລະເຊບາເພື່ອແລກກັບເຈົ້າ

ເພາະວ່າເຈົ້າປະເສີດໃນສາຍຕາຂອງເຮົາ ແລະໄດ້ຮັບກຽດ
ຕິຍົດແລະເຮົາຮັກເຈົ້າ ເຮົາຈຶ່ງໃຫ້ຄົນເພື່ອແລກກັບເຈົ້າ
ໃຫ້ຊົນຊາດທັງຫຼາຍເພື່ອແລກກັບຊີວິດຂອງເຈົ້າ

ຢ່າຢ້ານເລີຍ ເພາະເຮົາຢູ່ກັບເຈົ້າ ເຮົາຈະນຳເຜົ່າພັນຂອງເຈົ້າມາ
ຈາກຕາເວັນອອກ ແລະເຮົາຈະຮວບຮວມເຈົ້າມາຈາກຕາເວັນຕົກ

ເຮົາຈະເວົ້າກັບທິດເໜືອວ່າ 'ປ່ອຍສາ' ແລະກັບທິດໃຕ້ວ່າ
'ຢ່າຍຶດໄວ້ ຈົ່ງນຳບັນດາບຸດຊາຍຂອງເຮົາມາແຕ່ໄກ ແລະພວກ
ທິດາຂອງເຮົາຈາກສຸດປາຍແຜ່ນດິນໂລກ."

(ເອຊາຢາ ບົດ ທີ ໔໓:໑-໗)

ຈົ່ງສັຣເສີນພຣະເຈົ້າຄືພຣະບິດາຂອງພຣະເຢຊູຄຣິດເຈົ້າຂອງເຮົາທັງຫຼາຍ
ຄືພຣະບິດາຜູ້ຊົງຄວາມເມດຕາ ແລະພຣະເຈົ້າຜູ້ຊົງເລົ້າໂລມໃຈທຸກຢ່າງ

ພຣະອົງຜູ້ຊົງເລົ້າໂລມໃຈເຮົາໃນການທຸກລຳບາກທຸກຢ່າງຂອງ
ເຮົາ ເພື່ອເຮົາຈະສາມາດໄດ້ເລົ້າໂລມໃຈຄົນເຫຼົ່ານັ້ນ ທີ່ມີຄວາມ
ທຸກລຳບາກຢ່າງໃດຢ່າງນຶ່ງ ດ້ວຍຄວາມເລົ້າໂລມໃຈທີ່ເຮົາເອງ
ໄດ້ຮັບມາຈາກພຣະເຈົ້າ

ເພາະວ່າເຮົາມີສ່ວນທົນທຸກກັບພຣະຄຣິດຫຼາຍເຫຼືອລົ້ນສັນໃດ ຄວາມເລົ້າ
ໂລມໃຈຂອງເຮົາເນື່ອງຈາກພຣະຄຣິດກໍຫຼາຍເຫຼືອລົ້ນສັນນັ້ນ

ທີ່ເຮົາທົນຄວາມທຸກລຳບາກນັ້ນ ກໍເພື່ອໃຫ້ເຈົ້າທັງຫຼາຍໄດ້ຮັບ
ຄວາມເລົ້າໂລມໃຈແລະຄວາມພົ້ນ ແລະທີ່ເຮົາໄດ້ຮັບຄວາມເລົ້າ
ໂລມໃຈກໍເພື່ອໃຫ້ເຈົ້າທັງຫຼາຍໄດ້ຮັບຄວາມເລົ້າໂລມໃຈເໝືອນ
ກັນ ຄືຄວາມເລົ້າໂລມໃຈທີ່ຈະໃຫ້ເຈົ້າທັງຫຼາຍພຽນສູ້ທົນເອົາຄວາມ
ທຸກເໝືອນຢ່າງເຮົາສູ້ທົນຢູ່ນັ້ນ

(໒ ໂກຣິນໂທ ໑:໖-໗)

## ມ໖໒ ຄວາມເຊື່ອ 362

ອັນນຶ່ງ, ຄວາມເຊື່ອຄືຄວາມແນ່ນອນໃຈໃນສິ່ງທີ່ເຮົາຫວັງໄວ້ ເປັນຄວາມຕາຍໃຈເຖິງສິ່ງທີ່ຍັງບໍ່ເຫັນກັບຕາ

ເພາະໂດຍຄວາມເຊື່ອນີ້ເອງ ພວກເຖົ້າເກົ່າບູຮານໄດ້ຮັບ
ຄຳພຍານອັນດີ

ໂດຍຄວາມເຊື່ອນີ້ເຮົາທັງຫຼາຍຈຶ່ງເຂົ້າໃຈວ່າ ໂລກຈັກກະວານນີ້ໄດ້ຖືກສ້າງຂຶ້ນດ້ວຍພຣະທັມຂອງພຣະເຈົ້າ ດັ່ງນັ້ນສິ່ງທີ່ຕາເຫັນຢູ່ກໍບໍ່ໄດ້ເກີດຈາກສິ່ງທີ່ປາກົດແກ່ຕາ

ເພາະອາເບັນມີຄວາມເຊື່ອນັ້ນ ຈຶ່ງໄດ້ນຳເອົາເຄື່ອງບູຊາອັນຖືກ
ຕ້ອງກວ່າເຄື່ອງບູຊາຂອງກາອິນມາຖວາຍແດ່ພຣະເຈົ້າ ຊຶ່ງເຮັດ
ໃຫ້ເພິ່ນໄດ້ຮັບຄຳພຍານວ່າເປັນຄົນຊອບທັມ ພຣະເຈົ້າກໍໄດ້ຊົງ
ເປັນພຍານແກ່ຂອງທານຂອງເພິ່ນ ເຖິງແມ່ນວ່າອາເບັນ
ຕາຍແລ້ວກໍຈິງ ແຕ່ເພາະມີຄວາມເຊື່ອເພິ່ນຈຶ່ງຍັງເວົ້າຢູ່

ເພາະເອໂນກມີຄວາມເຊື່ອນີ້ ພຣະເຈົ້າຈຶ່ງຊົງຮັບເພິ່ນຂຶ້ນໄປ ເພື່ອບໍ່ໃຫ້ເພິ່ນພົບກັບຄວາມຕາຍແລະບໍ່ມີຜູ້ໃດພົບເຫັນເພິ່ນ ເພາະພຣະເຈົ້າຊົງຮັບເອົາເພິ່ນໄປແລ້ວ ອັນນຶ່ງກ່ອນທີ່ຊົງຮັບເອົາເພິ່ນຂຶ້ນໄປນັ້ນ ມີຜູ້ເປັນພຍານວ່າເພິ່ນເປັນທີ່ພໍພຣະທັຍພຣະເຈົ້າ ແຕ່ຖ້າບໍ່ມີຄວາມເຊື່ອແລ້ວ ຈະເປັນທີ່ພໍພຣະທັຍຂອງພຣະເຈົ້າບໍ່ໄດ້ ເພາະວ່າຜູ້ທີ່ມາເຝົ້າພຣະເຈົ້າໄດ້ນັ້ນ ຕ້ອງເຊື່ອວ່າພຣະອົງຊົງພຣະຊົນຢູ່ ແລະພຣະອົງຊົງເປັນຜູ້ປະທານຮາງວັນໃຫ້ແກ່ທຸກຄົນທີ່ສແວງຫາພຣະອົງ

ເພາະໂນເອມີຄວາມເຊື່ອນີ້ ພຣະເຈົ້າຈຶ່ງຊົງເຕືອນໃຫ້ຮູ້ເຖິງເຫດການທີ່ຍັງບໍ່ປາກົດ ເພິ່ນຈຶ່ງຢຳເກງຕໍ່ນາວາ ເພື່ອໃຫ້ຄອບຄົວຂອງຕົນພົ້ນຈາກຄວາມຕາຍ ແລະດ້ວຍເຫດນີ້ເພິ່ນຈຶ່ງຕັດສິນລົງໂທດໃສ່ມະນຸສໂລກ ແລະໄດ້ກາຍເປັນຜູ້ຮັບມໍຣະດົກຄື ຄວາມຊອບທັມຊຶ່ງເກີດມາຈາກຄວາມເຊື່ອ

ເພາະອັບຣາຮາມມີຄວາມເຊື່ອນີ້ ເມື່ອພຣະເຈົ້າຊົງເອີ້ນໃຫ້ເພິ່ນອອກເດີນທາງໄປຍັງບ່ອນທີ່ເພິ່ນຈະໄດ້ຮັບເປັນມໍຣະດົກ ເພິ່ນໄດ້ເຊື່ອຟັງແລະໄດ້ເດີນທາງອອກໄປໂດຍບໍ່ຮູ້ເລີຍວ່າຕົນຈະໄປໃສ

ເພາະເພິ່ນມີຄວາມເຊື່ອນີ້ ຈຶ່ງໄດ້ອາສັຍຢູ່ໃນແຜ່ນດິນທີ່ຊົງສັນຍາໄວ້ນັ້ນເໝືອນຄົນຕ່າງດ້າວ ຄືອາສັຍຢູ່ໃນຜ້າເຕັນດ້ວຍກັນກັບອີຊາກແລະຢາໂຄບ ຜູ້ຊຶ່ງໄດ້ຮ່ວມຮັບພຣະສັນຍາເປັນມໍຣະດົກອັນດຽວກັນ

ເພິ່ນໄດ້ລໍຄອຍນະຄອນທີ່ຕັ້ງຢູ່ເທິງຮາກຖານຊຶ່ງພຣະເຈົ້າຊົງເປັນນາຍຊ່າງແລະຊົງເປັນຜູ້ສ້າງຂຶ້ນ

ເພາະເພິ່ນມີຄວາມເຊື່ອນີ້ ເພິ່ນຈຶ່ງມີກຳລັງໃຫ້ບັງເກີດເຊື້ອສາຍ ເມື່ອອາຍຸແກ່ເກີນແລ້ວແລະນາງຊາຣາກໍເປັນຄົນໝັນ ແຕ່ອັບຣາຮາມກໍຖືວ່າພຣະອົງຜູ້ຊົງສັນຍານັ້ນເປັນຜູ້ສັດຊື່

ເຫດສັນນັ້ນຈາກຊາຍຄົນດຽວຊຶ່ງເກືອບຈະກ່າວໄດ້ວ່າເໝືອນຄົນທີ່ຕາຍແລ້ວນັ້ນ ກໍມີຜູ້ສືບເຊື້ອສາຍເກີດມາຢ່າງຫລວງຫລາຍ ເໝືອນດວງດາວໃນທ້ອງຟ້າແລະເໝືອນເມັດຊາຍທີ່ນັບບໍ່ຖ້ວນຢູ່ແຄມທະເລ

ສ່ວນຄົນເຫຼົ່ານັ້ນໄດ້ຕາຍໄປຂະນະທີ່ມີຄວາມເຊື່ອ ໂດຍບໍ່ໄດ້ຮັບສິ່ງທີ່ຊົງສັນຍາໄວ້ ແຕ່ເຂົາກໍໄດ້ເຫັນແລະຕ້ອນຮັບໄວ້ຕັ້ງແຕ່ໄກ ແລະຍອມຕົວວ່າເຂົາເປັນພຽງແຕ່ແຂກເມືອງທີ່ທ່ອງທ່ຽວໄປມາໃນໂລກ ເພາະຄົນທີ່ເວົ້າຢ່າງນີ້ກໍສະແດງໃຫ້ເຫັນຄັກໄດ້ວ່າ ເຂົາກຳລັງສແວງຫາບ້ານເມືອງຂອງຕົນ

ຈິງແທ້, ຖ້າເຂົາໄດ້ຄຶດເຖິງບ້ານເມືອງທີ່ເຂົາຈາກມາແລ້ວນັ້ນ ເຂົາກໍຄົງຈະມີໂອກາດກັບຄືນໄດ້

ແຕ່ບັດນີ້ເຂົາປາຖນາທີ່ຈະຢູ່ໃນເມືອງອັນປະເສີດກວ່ານັ້ນ ຄືເມືອງສວັນ ເຫດສັນນັ້ນພຣະເຈົ້າຈຶ່ງບໍ່ຊົງລະອາຍ ເມື່ອເຂົາເອີ້ນພຣະອົງວ່າເປັນພຣະເຈົ້າຂອງເຂົາເພາະພຣະອົງໄດ້ຊົງຈັດແຈງນະຄອນນຶ່ງໄວ້ສຳລັບເຂົາແລ້ວ

ຄົນທັງປວງນີ້ ເຖິງແມ່ນເຂົາໄດ້ຮັບຄຳພະຍານອັນດີຍ້ອນຄວາມເຊື່ອຂອງເຂົາ ແຕ່ເຂົາກໍຍັງບໍ່ໄດ້ຮັບສິ່ງທີ່ຊົງສັນຍາໄວ້ແລ້ວນັ້ນ

ເພາະວ່າພຣະເຈົ້າຊົງຈັດແຈ່ງສິ່ງທີ່ປະເສີດກວ່ານັ້ນສຳລັບພວກເຮົາ ເພື່ອວ່ານອກຈາກພວກເຮົາເຂົາຈະບໍ່ເຖິງທີ່ສຳເຣັດໄດ້.

(ເຮັບເຣີ ບົດ ທີ ໑໑:໑-໑໖, ໓໙, ໔໐)

## 363 ການອ້ອນວອນ ມຜມ

ຈົ່ງຫມັ່ນຂໍແລ້ວຈະຊົງປະທານໃຫ້ ຈົ່ງຫມັ່ນຊອກແລ້ວຈະພົບ ຈົ່ງຫມັ່ນເຄາະແລ້ວຈະຊົງໄຂໃຫ້

ເພາະວ່າທຸກຄົນທີ່ຫມັ່ນຂໍກໍໄດ້ຮັບ ທຸກຄົນທີ່ຫມັ່ນຊອກກໍພົບ
ທຸກຄົນທີ່ຫມັ່ນເຄາະກໍຊົງໄຂໃຫ້

ໃນພວກທ່ານມີຜູ້ໃດແດ່ ຖ້າລູກຂໍເຂົ້າປັ້ນນຶ່ງຈະບໍ່ໄດ້ເອົາກ້ອນຫີນໃຫ້ຕີ້

ຫຼືຖ້າລູກຂໍປາຈະບໍ່ໄດ້ເອົາງູໃຫ້ຕີ

ເຫດສັນນັ້ນຖ້າພວກທ່ານຜູ້ເປັນຄົນຊົ່ວ ຍັງຮູ້ຈັກເອົາຂອງດີໃຫ້ແກ່ລູກຂອງຕົນ ຫຼາຍກວ່ານັ້ນອີກຈັກເທົ່າໃດພຣະບິດາຂອງທ່ານຜູ້ຊົງສະຖິດຢູ່ໃນສວັນຈະຊົງປະທານຂອງດີແກ່ຜູ້ທີ່ຂໍຈາກພຣະອົງ

ແຕ່ຝ່າຍທ່ານ ເມື່ອຈະອ້ອນວອນຈົ່ງເຂົ້າໄປໃນຫ້ອງ ຄັນອັດປະຕູແລ້ວຈົ່ງອ້ອນວອນພຣະບິດາຂອງທ່ານຜູ້ຊົງສະຖິດຢູ່ໃນທີ່ລັບລີ້ ແລ້ວພຣະບິດາຂອງທ່ານຜູ້ຊົງເຫັນໃນທີ່ລັບລີ້ ຈະຊົງໂຜດປະທານບຳເຫນັດແກ່ທ່ານ.

(ມັດທາຍ ບົດ ທີ ໗:໗-໑໑; ບົດ ທີ ໖:໖)

"ຂ້າແດ່ພຣະເຈົ້າ ຂໍຊົງຫງ່ຽງພຣະກັນຕອບຂ້າພຣະອົງ ເພາະຂ້າພຣະອົງ ຍາກຈົນແລະຂັດສົນ

ຂໍຊົງໃຫ້ຈິດໃຈຜູ້ຮັບໃຊ້ຂອງພຣະອົງຍິນດີ ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂ້າພຣະອົງຕັ້ງໃຈຄັກແນ່ໃນພຣະອົງ

ຂ້າແດ່ອົງພຣະຜູ້ເປັນເຈົ້າ ເພາະພຣະອົງປະເສີດແລະຊົງພ້ອມທີ່ຈະປະທານ ອະພັຍ ອຸດົມດ້ວຍຄວາມຮັກຫມັ້ນຄົງຕໍ່ບັນດາຜູ້ຮ້ອງທູນພຣະອົງ

ຂ້າແດ່ພຣະເຈົ້າ ຂໍຊົງຫງ່ຽງພຣະໂສດຟັງຄຳທູນອ້ອນວອນຂອງຂ້າພຣະອົງ ຂໍຊົງຟັງສຽງຮອງທູນອ້ອນວອນຂອງຂ້າພຣະອົງ

ໃນວັນລຳບາກຂອງຂ້າພຣະອົງ ຂ້າພຣະອົງຮ້ອງທູນພຣະອົງ ເພາະພຣະອົງຊົງຕອບຂ້າພຣະອົງ

ຂ້າແດ່ອົງພຣະຜູ້ເປັນເຈົ້າ ໃນບັນດາພຣະບໍ່ມີຜູ້ໃດເໝືອນພຣະອົງ ແລະບໍ່ມີກິຈການໃດ ໆ ເໝືອນພຣະຣາຊກິດຂອງພຣະອົງ

ຂ້າແດ່ອົງພຣະຜູ້ເປັນເຈົ້າ ບັນດາປະຊາຊາດທີ່ພຣະອົງຊົງສ້າງ ຈະມາຂາບລົງຕໍ່ພຣະອົງແລະຈະເທີດທູນພຣະນາມຂອງພຣະອົງ

ເພາະພຣະອົງຍິ່ງຫຍ່ແລະຊົງກະທຳການອັສຈັນ ພຣະອົງແຕ່ອົງດຽວຊົງເປັນພຣະເຈົ້າ

ຂໍປະທານໝາຍສຳຄັນແຫ່ງຄວາມກະຣຸນາຂອງພຣະອົງແກ່ຂ້າພຣະອົງ ເພື່ອຄົນທີ່ກຽດຊັງຂ້າພຣະອົງຈະເຫັນແລະຈະໄດ້ອາຍ  ຂ້າແດ່ພຣະເຈົ້າ ເພາະພຣະອົງໄດ້ຊົງຊ່ອຍຂ້າພຣະອົງແລະຊົງເລົ້າໂລມຂ້າພຣະອົງ"

ພຣະເຈົ້າຊົງສະດັບຟັງຄຳອ້ອນວອນຂອງຂ້າພະເຈົ້າ ພຣະອົງຊົງ
ຮັບຄຳໄຫວ້ວອນຂອງຂ້າພະເຈົ້າ

(ເພງສັຣເສີນ ບົດ ທີ ໘໖:໑,໔-໑໐,໑໗; ບົດ ທີ ໖:໙)



ກົດໝາຍຂອງພຣະເຈົ້າຮອບຄອບແລະຟື້ນຟູຈິດວິນຍານ  ພຣະບັນຍັດຂອງພຣະເຈົ້ານັ້ນແນ່ນອນເຮັດໃຫ້ຄົນຮູ້ນ້ອຍມີປັນຍາ

ຂໍ້ບັງຄັບຂອງພຣະເຈົ້ານັ້ນຖືກຕ້ອງ ກະທຳໃຫ້ຈິດໃຈປິຕິຍິນດີ
ພຣະບັນຍັດຂອງພຣະເຈົ້ານັ້ນບໍຣິສຸດ ເຮັດໃຫ້ດວງຕາຮູ້ແຈ້ງ

ຄວາມຢຳເກງພຣະເຈົ້ານັ້ນສະອາດບໍຣິສຸດຖາວອນຕລອດໄປເປັນນິດ ກົດໝາຍຂອງພຣະເຈົ້າກໍທ່ຽງທັມແລະຊອບທັມທັງສິ້ນ

ໜ້າປາຖນາຫຼາຍກວ່າຄຳ ຫຼາຍກວ່າຄຳເກົ້າປະການນັ້ນຫຼາຍ
ຫວານຫຼາຍກວ່ານ້ຳເຜິ້ງທີ່ຍ້ອຍລົງຈາກຮັງ

ອັນນຶ່ງ, ສິ່ງເຫຼົ່ານີ້ເປັນທີ່ຕັກເຕືອນຜູ້ຮັບໃຊ້ຂອງພຣະອົງ  ການທີ່ຈະຮັກສາຂໍ້ຄວາມເຫຼົ່ານັ້ນກໍໄດ້ບຳເໜັດອັນຍິ່ງໃຫຍ່

ຄົນໜຸ່ມ ໆ ຈະຮັກສາທາງຂອງຕົນໃຫ້ບໍຣິສຸດໄດ້ຢ່າງໃດ
ໂດຍລະມັດລະວັງຕາມພຣະທັມຂອງພຣະອົງ

ຂ້າພຣະອົງສແວງຫາພຣະອົງດ້ວຍສຸດໃຈຂອງຂ້າພຣະອົງ ຂໍຢ່າໃຫ້ຂ້າພຣະອົງຫຼົງໄປຈາກພຣະບັນຍັດຂອງພຣະອົງ

ຂ້າພຣະອົງໄດ້ສະສົມພຣະດຳຣັດຂອງພຣະອົງໄວ້ໃນໃຈຂອງຂ້າພຣະອົງ ເພື່ອຂ້າພຣະອົງຈະບໍ່ເຮັດບາບຕໍ່ພຣະອົງ

(ເພງສັຣເສີນ ບົດ ທີ ໑໙:໗-໑໑; ບົດ ທີ ໑໑໙:໙-໑໑)

ແຕ່ຝ່າຍເຈົ້າ ຈົ່ງດຳເນີນຕໍ່ໄປສິ່ງທີ່ເຈົ້າໄດ້ຮຽນຮູ້ແລ້ວ ແລະໄດ້ເຊື່ອຢ່າງໝັ້ນຄົງ ເຈົ້າກໍຮູ້ແລ້ວວ່າເຈົ້າໄດ້ຮຽນມາຈາກຜູ້ໃດ

ແລະຮູ້ແລ້ວວ່າ ຕັ້ງແຕ່ນ້ອຍມາແລ້ວເຈົ້າກໍຮູ້ພຣະທັມຄັມພີສັກສິດ ຊຶ່ງສາມາດໃຫ້ເຈົ້າມີປັນຍາທີ່ນຳເຈົ້າໄປເຖິງຄວາມພົ້ນໄດ້ ດ້ວຍທາງຄວາມເຊື່ອໃນພຣະຄຣິດ ຄືພຣະເຢຊູ

ພຣະຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າແລະເປັນປໂຍດໃນການສອນ, ການກ່າວຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະການອົບຮົມໃນທາງຊອບທັມ

ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເຣັດແລະຈັດຕຽມໄວ້ພ້ອມສຳລັບການດີທຸກຢ່າງ

( ໒ ຕີໂມເຕ ບົດ ທີ ໓:໑໖-໑໗)

ພຣະເຈົ້າຊົງກ່າວພຣະທັມທັງສິ້ນຕໍ່ໄປນີ້ວ່າ

ເຮົາຄືພຣະເຈົ້າຂອງເຈົ້າ ຜູ້ໄດ້ນຳເຈົ້າອອກຈາກແຜ່ນດິນເອຢິບ ຄືຈາກແດນທີ່ເຈົ້າເຄີຍເປັນຂ້ອຍຂ້າ

ຢ່າມີພຣະເຈົ້າອື່ນໃດນອກເໜືອຈາກເຮົາ

ຢ່າເຮັດຮູບໂຄຣົບສຳລັບຕົນເປັນຮູບສິ່ງໃດຊຶ່ງມີຢູ່ໃນຟ້າເບື້ອງເທິງ ຫຼືເທິງແຜ່ນດິນເບື້ອງລຸ່ມ ຫຼືໃນນ້ຳໃຕ້ແຜ່ນດິນ

ຢ່າຂາບໄຫວ້ຫຼືປົວຣະບັດຮູບເຫຼົ່ານັ້ນ ເພາະເຮົາຄືພຣະເຈົ້າຂອງເຈົ້າ ເປັນພຣະເຈົ້າທີ່ຫວງແຫນ ໃຫ້ໂທດບິດາຕົກທອດໄປເຖິງລູກຫຼານຂອງຜູ້ທີ່ຊັງເຮົາຈົນເຖິງສາມຊົ່ວສີ່ຊົ່ວອາຍຸຄົນ

ແຕ່ເຮົາສະແດງຄວາມຮັກໝັ້ນຄົງຕໍ່ຄົນທີ່ຮັກເຮົາ ແລະປະຕິບັດຕາມບັນຍັດຂອງເຮົາ ຈົນເຖິງພັນຊົ່ວອາຍຸຄົນ

ຢ່າອອກພຣະນາມພຣະເຈົ້າຂອງເຈົ້າຢ່າງເປົ່າ ໆ ເພາະຜູ້ທີ່ອອກພຣະນາມພຣະອົງຢ່າງບໍ່ສົມຄວນນັ້ນ ພຣະເຈົ້າຈະຊົງຖືວ່າ ບໍ່ມີໂທດກໍ່ວ່າບໍ່ໄດ້

ຈົ່ງລະນຶກເຖິງວັນຊະບາໂຕ ຖືເປັນວັນບໍຣິສຸດ

ຈົ່ງເຮັດການງານທັງສິ້ນຂອງເຈົ້າຫົກວັນ ແຕ່ວັນທີເຈັດນັ້ນເປັນວັນຊະບາໂຕຂອງພຣະເຈົ້າຂອງເຈົ້າ

ໃນວັນນັ້ນ ຢ່າເຮັດການງານໃດ ໆ ບໍ່ວ່າເຈົ້າຂອງ ຫຼືລູກຊາຍ ຍິງຂອງເຈົ້າ ຫຼືຂ້ອຍຂ້າຂອງເຈົ້າ ຫຼືສັດໃຊ້ວຽກການຂອງເຈົ້າ ຫຼືແຂກທີ່ອາສັຍຢູ່ໃນປະຕູເມືອງຂອງເຈົ້າ

ເພາະໃນຫົກວັນພຣະເຈົ້າຊົງສ້າງຟ້າ ແລະແຜ່ນດິນ ທະເລ ແລະສັພສິ່ງ ຊຶ່ງມີຢູ່ໃນທີ່ເຫຼົ່ານັ້ນ ແຕ່ໃນວັນທີເຈັດຊົງພັກ ເພາະສັນນັ້ນພຣະເຈົ້າຊົງ ອວຍພຣະພອນວັນຊະບາໂຕ ແລະຊົງຕັ້ງວັນນັ້ນໄວ້ເປັນວັນບໍຣິສຸດ

ຈົ່ງໃຫ້ກຽດແກ່ບິດາມານດາຂອງເຈົ້າ ເພື່ອອາຍຸຂອງເຈົ້າຈະ ໄດ້ຍືນນານເທິງແຜ່ນດິນ ຊຶ່ງພຣະເຈົ້າຂອງເຈົ້າປະທານໃຫ້ ແກ່ເຈົ້າ

ຢ່າຂ້າຄົນ

ຢ່າຫຼິ້ນຊູ້ຈາກຜົວເມັຽ

ຢ່າລັກຊັບ

ຢ່າເປັນພຍານເທັດໃສ່ຮ້າຍເພື່ອນບ້ານ

ຢ່າໂລບເອົາຄົວເຮືອນຂອງເພື່ອນບ້ານ ຢ່າໂລບເອົາພັຣຍາຂອງເພື່ອນ ບ້ານ, ຫຼືຂ້ອຍຂ້າຂອງເຂົາ, ຫຼືງົວລໍຂອງເຂົາ ຫຼືສິ່ງໃດ ໆ ທີ່ເປັນຂອງເພື່ອນບ້ານ.

(ອົພຍົບຫນີ ບົດ ທີ ໒໐:໑-໑໗)

ຢ່າກ່າວໂທດໃສ່ເຂົາ ເພື່ອພຣະເຈົ້າຈະບໍ່ຊົງກ່າວໂທດໃສ່ທ່ານ

ເພາະວ່າທ່ານຈະກ່າວໂທດໃສ່ເຂົາຢ່າງໃດ ພຣະເຈົ້າຈະຊົງກ່າວໂທດໃສ່ທ່ານຢ່າງນັ້ນ ພວກທ່ານຈະຕວງໃຫ້ເຂົາດ້ວຍເຄື່ອງຜອງອັນໃດ ພຣະເຈົ້າຈະຊົງຕວງໃຫ້ພວກທ່ານດ້ວຍເຄື່ອງຜອງອັນນັ້ນ

ເປັນຫຍັງທ່ານຈຶ່ງຫຼຽວເຫັນຂີ້ເຫຍື້ອທີ່ຢູ່ໃນຕາພີ່ນ້ອງຂອງທ່ານ ແຕ່ໄມ້ທັ່ງທ່ອນທີ່ຢູ່ໃນຕາຂອງຕົນທ່ານບໍ່ຮູ້ສຶກ

ຫຼືເປັນອັນໃດທ່ານຈຶ່ງກ່າວແກ່ພີ່ນ້ອງຂອງທ່ານວ່າ ໃຫ້ຂ້ອຍເຂັ່ຍຂີ້ເຫຍື້ອອອກຈາກຕາຂອງເຈົ້າ ແຕ່ເບິ່ງແມ, ໄມ້ທັ່ງທ່ອນມີຢູ່ໃນຕາຂອງທ່ານເອງ

ໂອ ຄົນໜ້າຊື່ໃຈຄົດເອີຍ ຈົ່ງເອົາໄມ້ທັ່ງທ່ອນອອກຈາກຕາຂອງທ່ານກ່ອນ ແລ້ວທ່ານຈະເຫັນໄດ້ຄັກຈຶ່ງຈະເຂັ່ຍຂີ້ເຫຍື້ອອອກຈາກຕາພີ່ນ້ອງຂອງຕົນໄດ້

(ມັດທາຍ ບົດ ທີ ໗:໑-໕)

ເມື່ອບຸດມະນຸດຊົງພຣະຣັສມີລະເດັດມາພ້ອມດ້ວຍຝູງເທວະດາ ເມື່ອນັ້ນ ພຣະອົງຈະຊົງປະທັບເທິງພຣະທີ່ນັ່ງອັນຮຸ່ງເຮືອງຂອງພຣະອົງ

ບັນດາປະຊາຊາດຕ່າງ ໆ ຈະຖືກຊຸມໂຮມກັນຕໍ່ພຣະພັກຂອງພຣະອົງ ແລະພຣະອົງຈະຊົງແຍກເຂົາອອກກັນເໝືອນຜູ້ລ້ຽງສັດແຍກແກະອອກຈາກຝູງແບ້

ຝູງແກະນັ້ນຈະຊົງຈັດໃຫ້ຢູ່ເບື້ອງຂວາພຣະຫັດຂອງພຣະອົງ ແຕ່ຝູງແບ້ນັ້ນ ຈະຊົງຈັດໃຫ້ຢູ່ເບື້ອງຊ້າຍ

ເມື່ອນັ້ນພຣະມະຫາກະສັດຈະຊົງກ່າວແກ່ບັນດາຜູ້ທີ່ຢູ່ທາງພຣະຫັດຂວາຂອງພຣະອົງວ່າ "ພວກທ່ານທີ່ໄດ້ຮັບພຣະພອນຈາກພຣະບິດາຂອງເຮົາເອີຍ ຈົ່ງມາຮັບເອົາຣາຊອານາຈັກຊຶ່ງໄດ້ຈັດຕຽມໄວ້ສຳລັບທ່ານຕັ້ງແຕ່ຕົ້ນເດີມໂລກ

ເພາະວ່າເມື່ອເຮົາຢາກເຂົ້າ ພວກທ່ານກໍໃຫ້ເຮົາກິນ ເຮົາຫິວນ້ຳ ພວກທ່ານກໍໃຫ້ເຮົາດື່ມ ເຮົາເປັນແຂກບ້ານ ພວກທ່ານກໍໄດ້ຕ້ອນຮັບເຮົາໄວ້

ເຮົາເປືອຍຕົວ ພວກທ່ານກໍໄດ້ເອົາເຄື່ອງມາໃຫ້ເຮົານຸ່ງຫົ່ມ ເຮົາເຈັບປ່ວຍ ພວກທ່ານກໍມາຢ້ຽມຢາມ ເຮົາຢູ່ໃນຄຸກພວກທ່ານກໍໄດ້ມາຫາ"

ເມື່ອນັ້ນບັນດາພວກລິນທັມຈະທູນວ່າ "ພຣະອົງເຈົ້າເອີຍ ພວກຂ້າພຣະອົງໄດ້ເຫັນພຣະອົງຊົງຢາກເຂົ້າຫຼືຫິວນ້ຳ ແລ້ວໄດ້ຈັດມາຖວາຍພຣະອົງເມື່ອໃດ

ພວກຂ້າພຣະອົງໄດ້ເຫັນພຣະອົງຊົງເປັນແຂກບ້ານ ແລະໄດ້ຕ້ອນຮັບໄວ້ ຫຼືຊົງເປືອຍພຣະກາຍ ແລ້ວເອົາເຄື່ອງມາໃຫ້ທົ່ງເມື່ອໃດ

ພວກຂ້າພຣະອົງໄດ້ເຫັນພຣະອົງຊົງປະຊວນຢູ່ ຫຼືຢູ່ໃນຄຸກ ແລະໄດ້ມາ
ເຝົ້າພຣະອົງເມື່ອໃດ"

ຝ່າຍພຣະມະຫາກະສັດຈະຊົງຕອບວ່າ "ເຮົາບອກພວກທ່ານຕາມ
ຈິງວ່າ ທີ່ພວກທ່ານໄດ້ເຮັດການເຫຼົ່ານີ້ແກ່ຜູ້ຕ່ຳຕ້ອຍທີ່ສຸດຄົນນຶ່ງ
ໃນພວກພີ່ນ້ອງຂອງເຮົານີ້ ກໍໄດ້ເຮັດໃຫ້ເຮົາເໝືອນກັນ"

ເມື່ອນັ້ນພຣະອົງຈະຊົງກ່າວກັບບັນດາຜູ້ທີ່ຢູ່ເບື້ອງພຣະຫັດຊ້າຍຂອງພຣະອົງ
ວ່າ , "ສູທັງຫຼາຍຜູ້ຖືກປ້ອຍເວນ ຈົ່ງຖອຍໜີຈາກເຮົາ ເຂົ້າໄປໃນໄຟ
ທີ່ໄໝ້ຢູ່ເປັນນິດ ຊຶ່ງຊົງຈັດຕຽມໄວ້ສຳລັບພຍາມານກັບບໍຣິວານຂອງມັນ

ເພາະວ່າເຮົາຢາກເຂົ້າ ສູບໍ່ໄດ້ໃຫ້ເຮົາກິນ ເຮົາຫິວນ້ຳ
ສູບໍ່ໄດ້ໃຫ້ເຮົາດື່ມ

ເຮົາເປັນແຂກບ້ານມາ ສູບໍ່ໄດ້ພາເຮົາເຂົ້າໄປ ເຮົາເປືອຍຕົວ ແຕ່ສູ
ບໍ່ໄດ້ເອົາເຄື່ອງມາໃຫ້ນຸ່ງ ເຮົາເຈັບປ່ວຍແລະຢູ່ໃນຄຸກ ແຕ່ສູບໍ່ໄດ້ມາຢ້ຽມ
ຢາມເຮົາ"

ເຂົາຈະທູນຕອບວ່າ "ພຣະອົງເຈົ້າເອີຍ ພວກຂ້າພຣະອົງໄດ້ເຫັນ
ພຣະອົງຊົງຢາກເຂົ້າຫຼືຊົງຫິວນ້ຳ ຊົງເປັນແຂກບ້ານມາ ,ຊົງເປືອຍ
ພຣະກາຍ, ຊົງປະຊວນຫຼືຊົງຢູ່ໃນຄຸກ ແລະພວກຂ້າພຣະອົງບໍ່ໄດ້
ປະຕິບັດພຣະອົງຍາມໃດ"

ເມື່ອນັ້ນພຣະອົງຈະຊົງຕອບແກ່ເຂົາວ່າ "ເຮົາບອກສູທັງຫຼາຍຕາມຄວາມ
ຈິງວ່າ ທີ່ສູບໍ່ໄດ້ເຮັດການເຫຼົ່ານັ້ນແກ່ຜູ້ຕ່ຳຕ້ອຍທີ່ສຸດໃນພວກນີ້ ພວກສູ
ກໍບໍ່ໄດ້ເຮັດແກ່ເຮົາເໝືອນກັນ

ແລ້ວພວກເຫຼົ່ານີ້ຈະອອກໄປສູ່ໂທດອັນຕລອດໄປເປັນນິດ
ແຕ່ພວກສິນທັມກໍເຂົ້າສູ່ຊີວິດອັນຕລອດໄປເປັນນິດ

(ມັດທາຍ ບົດ ທີ ໒໕:໓໑-໔໖)



ເມື່ອທອດພຣະເນດເຫັນຄົນຫຼວງຫຼາຍດັ່ງນັ້ນ ພຣະອົງກໍສະເດັດຂຶ້ນພູ ເມື່ອປະທັບລົງແລ້ວ ພວກສາວົກກໍເຂົ້າມາເຝົ້າ

ພຣະອົງຈຶ່ງຊົງໄຂພຣະໂອດຕັ້ງຕົ້ນສັ່ງສອນເຂົາວ່າ ,

"ຜູ້ໃດຍາກຈົນຝ່າຍຈິດວິນຍານກໍເປັນສຸກ ເພາະວ່າແຜ່ນດິນສວັນເປັນຂອງຜູ້ນັ້ນ

ຜູ້ໃດໂສກເສົ້າກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ຮັບການຊົງເລົ້າໂລມ

ຜູ້ໃດມີໃຈອ່ອນຫວານກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ຮັບແຜ່ນດິນໂລກເປັນມໍຣະດົກ

ຜູ້ໃດອຶດຫິວຄວາມຊອບທັມກໍເປັນສຸກ ເພາະວ່າພຣະເຈົ້າຈະຊົງໃຫ້ອິ່ມບໍຣິບູນ

ຜູ້ໃດມີໃຈກະລຸນາກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ຮັບພຣະກະລຸນາຕອບ

ຜູ້ໃດມີໃຈບໍຣິສຸດກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ເຫັນພຣະເຈົ້າ

ຜູ້ໃດສ້າງຄວາມສງົບສຸກກໍເປັນສຸກ ເພາະວ່າພຣະເຈົ້າຈະຊົງເອີ້ນຜູ້ນັ້ນວ່າເປັນບຸດ

ຜູ້ໃດຖືກຂົ່ມເຫັງເພາະເຫັນແກ່ຄວາມຊອບທັມກໍເປັນສຸກ ເພາະວ່າແຜ່ນດິນສວັນເປັນຂອງຜູ້ນັ້ນ

ເມື່ອເຂົາຈະຕິຕຽນຂົ່ມເຫັງນິນທາວ່າຮ້າຍທ່ານທັງຫລາຍເປັນຄວາມບໍ່ຈິງທຸກຢ່າງເພາະເຫັນແກ່ເຮົາ ພວກທ່ານກໍເປັນສຸກ

ຈົ່ງຊົມຊື່ນຍິນດີ ເພາະວ່າບຳເໜັດຂອງທ່ານທັງຫລາຍມີບໍຣິບູນໃນສວັນ ເໝືອນດັ່ງນັ້ນແຫລະ, ເຂົາໄດ້ຂົ່ມເຫັງຜູ້ປະກາດພຣະທັມທີ່ຢູ່ກ່ອນທ່ານທັງຫລາຍ

ທ່ານທັງຫລາຍຄືເກືອສຳລັບໂລກ ແຕ່ຖ້າເກືອນັ້ນຈືດຈາງໄປແລ້ວ ຈະເຮັດໃຫ້ກັບເຄັມອີກໄດ້ຢ່າງໃດ ແຕ່ນັ້ນໄປກໍບໍ່ມີປໂຍດອັນໃດ ມີແຕ່ຈະຖິ້ມເສັຽໃຫ້ຄົນຢຽບເທົ່ານັ້ນ

ພວກທ່ານຄືແສງສວ່າງສຳລັບໂລກ ເມືອງທີ່ຕັ້ງຢູ່ເທິງພູຈະບັງລັບໄວ້ບໍ່ໄດ້

ບໍ່ທ່ອນມີຜູ້ໃດເມື່ອໃຕ້ໂຄມແລ້ວເອົາບຸງນາກອບ ແຕ່ເຄີຍຕັ້ງໄວ້ເທິງເຄື່ອງຮອງຕີນໂຄມແລະມັນສ່ອງແຈ້ງໄປທົ່ວທຸກຄົນທີ່ຢູ່ໃນເຮືອນນັ້ນ

ເໝືອນຢ່າງນັ້ນແຫຼະ, ພວກທ່ານຈຶ່ງສ່ອງແຈ້ງແກ່ຄົນທັງປວງ
ເພື່ອວ່າເມື່ອເຂົາເຫັນການດີທີ່ພວກທ່ານເຮັດ ເຂົາຈະໄດ້
ສັຣເສີນພຣະບິດາຂອງພວກທ່ານຜູ້ຊົງສະຖິດຢູ່ໃນສວັນ.

(ມັດທາຍ ບົດ ທີ ໕:໑-໑໗)



ເມື່ອພຣະເຢຊູຊົງປະສູດຢູ່ບ້ານເບດເລເຮັມແຂວງຢູດາຍ ໃນສມັຍຂອງ
ກະສັດເຮໂຣດ ເບິ່ງແມ, ມີພວກໂຫຣາຈານຈາກທິດຕາເວັນອອກ
ມາຍັງກຸງເຢຣູຊາເລັມ

ຖາມວ່າ, "ກຸມມານຜູ້ເກີດມາເປັນກະສັດຂອງຊາວຢິວນັ້ນຢູ່
ທີ່ໃດ ເພາະເຮົາໄດ້ເຫັນດາວຂອງທ່ານປາກົດຂຶ້ນ
ເຮົາຈຶ່ງມາເພື່ອຈະຂາບໄຫວ້ທ່ານ"

ເມື່ອພວກໂຫຣາຈານໄດ້ຍິນຄຳສັ່ງດັ່ງນີ້ກໍພາກັນອອກໄປ ເບິ່ງແມ,
ດາວທີ່ເຂົາໄດ້ເຫັນເມື່ອປາກົດຂຶ້ນນັ້ນກໍໄດ້ນຳໜ້າເຂົາໄປ
ຈົນມາຢຸດຢູ່ເໜືອສະຖານທີ່ກຸມມານຢູ່ນັ້ນ.

(ມັດທາຍ ບົດ ທີ ໒:໑, ໒, ໙)

ໃນແຖບນັ້ນມີພວກລ້ຽງແກະທີ່ນອນເຝົ້າຝູງແກະຂອງເຂົາຢູ່ທົ່ງ
ໃນເວລາກາງຄືນ

ແລະມີເທວະດາຕົນນຶ່ງຂອງອົງພຣະຜູ້ເປັນເຈົ້າໄດ້ມາປາກົດແກ່ເຂົາ ແລະຣັສມີຂອງອົງພຣະຜູ້ເປັນເຈົ້າໄດ້ສ່ອງຮອບເຂົາແລະເຂົາໄດ້ຕົກສະທ້ານໃຈຫຼາຍ

ຝ່າຍເທວະດາຕົນນັ້ນກໍກ່າວຕໍ່ເຂົາວ່າ, "ຢ່າຊູ່ຢ້ານ ເພາະນີ້ແຫຼະ ເຮົານຳເອົາຂ່າວດີມາປະກາດໃຫ້ພວກເຈົ້າຮູ້ ຊຶ່ງເປັນທີ່ຊື່ນຊົມຍິນດີອັນໃຫຍ່ແກ່ພົລເມືອງທັງຫມົດ

ເພາະວ່າໃນວັນນີ້ ພຣະຜູ້ຊົງໂຜດໃຫ້ພົ້ນອົງນຶ່ງ ຄືພຣະຄຣິດເຈົ້າມາບັງເກີດໃນເມືອງດາວິດສຳລັບເຈົ້າທັງຫຼາຍ

ອັນນີ້ຈະເປັນຫມາຍສຳຄັນແກ່ເຈົ້າທັງຫຼາຍ ຄືພວກເຈົ້າຈະໄດ້ພົບພຣະກຸມມານຕົນນຶ່ງພັນຜ້າອ້ອມນອນຢູ່ຮາງຫຍ້າ"

ໃນທັນໃດນັ້ນມີກອງທັບສວັນຫມູ່ໃຫຍ່ມາຢູ່ກັບເທວະດາຕົນນັ້ນ ຮ່ວມສັຣເສີນພຣະເຈົ້າວ່າ ,

"ພຣະຣັສມີຈົ່ງມີແດ່ພຣະເຈົ້າໃນທີ່ສູງສຸດ ແລະທີ່ແຜ່ນດິນໂລກຈົ່ງມີສັນຕິສຸກແກ່ມະນຸດທັງປວງທີ່ພຣະອົງຊົງຊອບພຣະທັຍນັ້ນ"

ເມື່ອເທວະດາເຫຼົ່ານັ້ນໄປຈາກເຂົາຂຶ້ນສູ່ສວັນແລ້ວ ພວກລ້ຽງແກະໄດ້ເວົ້າກັນວ່າ, "ເຮົາພາກັນໄປເມືອງເບດເລເຮັມເທາະ ໄປເບິ່ງເຫດການທີ່ເກີດຂຶ້ນຊຶ່ງອົງພຣະຜູ້ເປັນເຈົ້າໄດ້ຊົງແຈ້ງແກ່ເຮົານັ້ນ"

ເຂົາກໍຮີບໄປແລ້ວພົບມາຣີກັບໂຢເຊບ ແລະເຫັນພຣະກຸມມານນັ້ນນອນຢູ່ໃນຮາງຫຍ້າ

ເມື່ອເຂົາໄດ້ເຫັນແລ້ວກໍເລົ່າເຣື່ອງທີ່ເຂົາໄດ້ຍິນເຖິງພຣະກຸມມານນັ້ນ

ຄົນທັງປວງທີ່ໄດ້ຍິນກໍປລາດໃຈດ້ວຍຖ້ອຍຄຳທີ່ພວກລ້ຽງແກະ
ໄດ້ບອກແກ່ເຂົາ

ຝ່າຍມາຣີອາກໍເກັບບັນດາສິ່ງເຫຼົ່ານີ້ໄວ້ໃນໃຈແລະຄຶດຮ່ຳເພິງຢູ່

ພວກລ້ຽງແກະຈຶ່ງກັບໄປຍ້ອງຍໍສັຣະເສີນພຣະເຈົ້າ ເພາະ
ເຫດການທັງປວງທີ່ເຂົາໄດ້ຍິນແລະໄດ້ເຫັນ ຕາມທີ່ໄດ້ບອກ
ໄວ້ກັບເຂົານັ້ນ.

(ລືກາ ບົດ ທີ ໒:໑໙-໒໐)



ທ່ານໄດ້ຖືກມະນຸດດູຫມິ່ນແລະປະຖິ້ມ ເປັນຄົນທີ່ຮັບຄວາມເຈັບປວດ
ແລະຄຸ້ນເຄີຍກັບຄວາມເຈັບໄຂ້ ແລະຄືຜູ້ນຶ່ງຊຶ່ງຄົນທົນເບິ່ງບໍ່ໄດ້
ທ່ານຖືກດູຫມິ່ນ ແລະເຮົາທັງຫຼາຍບໍ່ໄດ້ນັບຖືທ່ານ

ແທ້ຈິງ, ທ່ານໄດ້ແບກຄວາມເຈັບໄຂ້ຂອງເຮົາທັງຫຼາຍ
ແລະຫອບຄວາມເຈັບປວດຂອງເຮົາໄປ ສັນນັ້ນເຮົາທັງຫຼາຍ
ກໍຍັງຖືວ່າ ທ່ານຖືກຕີ ຄືພຣະເຈົ້າຊົງຂ້ຽນຕີແລະຂົ່ມໃຈ

ແຕ່ທ່ານຖືກບາດເຈັບເພາະຄວາມທໍຣະຍົດຂອງເຮົາທັງຫຼາຍ ທ່ານ
ບອບຊ້ຳເພາະຄວາມຜິດບາບຂອງເຮົາ ການຕີສອນອັນເຮັດໃຫ້ເຮົາ
ທັງຫຼາຍສົມບູນນັ້ນ ຕົກແກ່ທ່ານ ຊຶ່ງທ່ານຕ້ອງຟົກຊ້ຳນັ້ນກໍໃຫ້ເຮົາ
ຫາຍດີ

ເຮົາທຸກຄົນໄດ້ຈົ່ນໄປເໝືອນແກະ ເຮົາທຸກຄົນໄດ້ຫັນເຫ
ໄປຕາມທາງຂອງຕົນເອງ ແລະພຣະເຈົ້າຊົງວາງລົງເທິງ
ທ່ານ ຊຶ່ງຄວາມຜິດບາບຂອງເຮົາທຸກຄົນ.

(ເອຊາອີ ບົດ ທີ ໕໓:໕-໖)

ແລ້ວປີລາດຈຶ່ງເອົາພຣະເຢຊູໄປໃຫ້ເຂົາຂ້ຽນ

ແລະພວກທະຫານໄດ້ເອົາເຄືອໜາມມາຖັກເປັນໂຄ້ງແຫນ
ພວງມະລັຍສຸບໃສ່ພຣະສຽນຂອງພຣະອົງ ພ້ອມທັງເອົາເສື້ອ
ຄຸມສີມ່ວງອ່ອນມານຸ່ງໃຫ້ພຣະອົງ

ແລະເຂົາໄດ້ຫຍັບເຂົ້າມາຫາພຣະອົງທູນວ່າ, "ກະສັດຂອງຊາດຢິວ
ເອີຍ ຈົ່ງຊົງພຣະຈະເຣີນເທີນ" ແລະເຂົາກໍຕົບພຣະພັກພຣະອົງ

ປີລາດໄດ້ອອກໄປອີກແລະກ່າວຕໍ່ເຂົາວ່າ, "ເບິ່ງແມ, ເຮົາ
ພາຄົນນີ້ອອກມາຫາທ່ານທັງຫຼາຍ ເພື່ອໃຫ້ພວກທ່ານຮູ້ວ່າ
ເຮົາບໍ່ເຫັນຄວາມຜິດໃນຜູ້ນີ້ຈັກປະການ"

ພຣະເຢຊູຈຶ່ງສະເດັດອອກມາຊົງພວງມະລັຍທີ່ເຮັດດ້ວຍເຄືອໜາມນັ້ນ
ແລະຊົງເສື້ອຄຸມສີມ່ວງອ່ອນ ປີລາດຈຶ່ງກ່າວແກ່ເຂົາວ່າ,
"ເບິ່ງຄົນນີ້ແມ"

ເມື່ອພວກປະໂຣຫິດຕົນໃຫຍ່ແລະພວກເຈົ້າໜ້າທີ່ໄດ້ເຫັນພຣະ
ອົງ ເຂົາກໍຮ້ອງຂຶ້ນວ່າ, "ຄຶງໄວ້ທີ່ໄມ້ກາງແຂນ ຄຶງໄວ້ທີ່ໄມ້
ກາງແຂນ" ປີລາດຈຶ່ງກ່າວຕໍ່ເຂົາວ່າ, "ພວກເຈົ້າຈົ່ງເອົາ
ໄປຄຶງໄວ້ ເພາະຝ່າຍເຮົາບໍ່ເຫັນຄວາມຜິດໃນຜູ້ນີ້"

ແລ້ວປີລາດຈຶ່ງມອບພຣະອົງໃຫ້ເຂົາ ເພື່ອເອົາໄປຄຶງໄວ້ທີ່ໄມ້ກາງແຂນ
ເຂົາຈຶ່ງຄຸມເອົາພຣະເຢຊູອອກໄປ

ແລະພຣະອົງຊົງແບກເອົາໄມ້ກາງແຂນຂອງພຣະອົງ ສະເດັດໄປ
ເຖິງບ່ອນທີ່ເອີ້ນວ່າກະໂຫຼກຫົວ (ພາສາເຮັບເຣີວ່າ ໂຄລະໂຄທາ)

ທີ່ນັ້ນເຂົາໄດ້ຄຶງພຣະອົງໄວ້ທີ່ໄມ້ກາງແຂນກັບອີກສອງຄົນ ຄົນລະຂ້າງແລະ
ພຣະເຢຊູຊົງຢູ່ກາງ

ປີລາດໄດ້ຂຽນປ້າຍຕິດໄວ້ທີ່ໄມ້ກາງແຂນອ່ານວ່າ "ເຢຊູໄທນາຊາ
ເຣັດກະສັດຂອງຊາດຢິວ."

(ໂຢຮັນ ບົດ ທີ ໑໙:໑-໗, ໑໗-໑໙)

ມັດ໐ ການຄືນພຣະຊົນ 370

ພາຍຫຼັງວັນຊະບາໂຕນັ້ນເວລາໃກ້ຮຸ່ງເຊົ້າວັນຕົ້ນສັບປະດາ ມາຣີອາໂຫມັກ
ດາລາ ກັບມາຣີອາອີກຄົນນຶ່ງນັ້ນ ໄດ້ພາກັນໄປເບິ່ງອຸບໂມງ

ເບິ່ງແມ, ເກີດແຜ່ນດິນຫວັ່ນໄຫວຢ່າງໜັກ ເພາະເທວະດາຕົນນຶ່ງ
ຂອງອົງພຣະຜູ້ເປັນເຈົ້າລົງມາຈາກສວັນ ໄດ້ກິ້ງກ້ອນຫີນອອກຈາກ
ປາກອຸບໂມງ ແລ້ວກໍນັ່ງເທິງຫີນນັ້ນ

ລັກສະນະຂອງເທວະດາຕົນນັ້ນເໝືອນແສງຟ້າແມບ ເຄື່ອງນຸ່ງກໍຂາວເໝືອນ
ຫິມະ

ພວກຄົນຍາມທີ່ເຝົ້າຢູ່ກໍຢ້ານເທວະດານັ້ນ ແລະກາຍເປັນເໝືອນຄົນຕາຍ

ຝ່າຍເທວະດາຕົນນັ້ນໄດ້ກ່າວແກ່ພວກຍິງວ່າ, "ພວກເຈົ້າຢ່າຊູຢ້ານ ເຮົາກໍຮູ້ແລ້ວວ່າ ພວກເຈົ້າມາຊອກຫາພຣະເຢຊູ ຜູ້ທີ່ຖືກຄຶງໄວ້ທີ່ໄມ້ກາງແຂນ

ພຣະອົງບໍ່ປະທັບຢູ່ທີ່ນີ້ ເພາະຖືກຊົງບັນດານໃຫ້ເປັນຄືນມາ ຕາມທີ່ພຣະອົງໄດ້ຊົງກ່າວແລ້ວ ຈົ່ງມາເບິ່ງບ່ອນທີ່ພຣະອົງໄດ້ບັນທົມຢູ່ນັ້ນ

ແລ້ວຈົ່ງຮີບໄປບອກພວກສາວົກຂອງພຣະອົງວ່າ 'ພຣະອົງຖືກຊົງບັນດານໃຫ້ເປັນຄືນມາຈາກຕາຍແລ້ວ ແລະເບິ່ງແມ, ພຣະອົງສະເດັດໄປຍັງແຂວງຄາລີເລກ່ອນທ່ານທັງຫລາຍ ພວກທ່ານຈະໄດ້ເຫັນພຣະອົງຢູ່ທີ່ນັ້ນ' ນີ້ແຫລະເຮົາໄດ້ບອກພວກເຈົ້າແລ້ວ

ຍິງເຫຼົ່ານັ້ນກໍຮີບອອກໄປຈາກອຸບໂມງ, ທັງຢ້ານທັງຍິນດີຫຼາຍ, ແລ່ນໄປບອກພວກສາວົກຂອງພຣະອົງ

ແລະເບິ່ງແມ, ພຣະເຢຊູໄດ້ສະເດັດມາພົບເຂົາແລະຊົງກ່າວວ່າ, "ຈົ່ງຈະເຣີນເທີນ" ຍິງເຫຼົ່ານັ້ນກໍເຂົ້າມາຈັບພຣະບາດນະມັສການພຣະອົງ

ພຣະເຢຊູຊົງກ່າວວ່າ, "ຢ່າຊູຢ້ານ ຈົ່ງໄປບອກພວກພີ່ນ້ອງຂອງເຮົາໃຫ້ໄປຍັງແຂວງຄາລີເລ ເຂົາຈະໄດ້ເຫັນເຮົາທີ່ນັ້ນ"

(ມັດທາຍ ບົດ ທີ ໒໘:໑-໑໐)

ຄ່ຳວັນນັ້ນເປັນວັນຕົ້ນສັປດາ ເມື່ອສາວົກອັດປະຕູຫ້ອງທີ່ເຂົາຢູ່ນັ້ນ ເພາະຢ້ານພວກຢິວ ພຣະເຢຊູໄດ້ສະເດັດເຂົ້າມາຊົງຢືນຢູ່ທ່າມກາງເຂົາ ແລ້ວຊົງກ່າວວ່າ, "ສັນຕິສຸກຈົ່ງມີແກ່ທ່ານທັງຫລາຍ"

ເມື່ອພຣະອົງຊົງກ່າວຢ່າງນັ້ນແລ້ວ ພຣະອົງກໍຊົງສະແດງພຣະຫັດແລະຂ້າງຂອງພຣະອົງໃຫ້ເຂົາເບິ່ງ ເມື່ອພວກສາວົກໄດ້ເຫັນອົງພຣະຜູ້ເປັນເຈົ້າແລ້ວກໍເກີດຄວາມຊົມຊື່ນຍິນດີ

ຄັນລ່ວງໄປແປດວັນແລ້ວ ພວກສາວົກຂອງພຣະອົງກໍຢູ່ພ້ອມກັນທີ່ເຮືອນນັ້ນອີກ ແລະໂທມາກໍຢູ່ກັບເຂົາ ສ່ວນປະຕູກໍອັດໄວ້ ແຕ່ພຣະເຢຊູກໍໄດ້ສະເດັດເຂົ້າມາຢືນຢູ່ທ່າມກາງເຂົາແລ້ວຊົງກ່າວວ່າ, "ສັນຕິສຸກຈົ່ງມີຢູ່ກັບທ່ານທັງຫລາຍ"

ແລ້ວພຣະອົງຊົງກ່າວແກ່ໂທມາວ່າ, "ຈົ່ງດຶງນີ້ວມືຂອງທ່ານມາລູບເບິ່ງຝາມືຂອງເຮົາ ຈົ່ງດຶງມືຂອງທ່ານມາໃສ່ຂ້າງຂອງເຮົາ ຢ່າຂາດຄວາມເຊື່ອແຕ່ຈົ່ງເຊື່ອ"

ໂທມາທູນຕອບວ່າ, "ອົງພຣະຜູ້ເປັນເຈົ້າຂອງຂ້າພຣະອົງແລະພຣະເຈົ້າຂອງຂ້າພຣະອົງ"

ພຣະເຢຊູຊົງກ່າວກັບໂທມາວ່າ, "ເພາະໄດ້ເຫັນເຮົາທ່ານຈຶ່ງເຊື່ອ ຫຼື ຜູ້ທີ່ບໍ່ເຫັນເຮົາແຕ່ໄດ້ເຊື່ອກໍເປັນສຸກ"

(ໂຢຮັນ ບົດ ທີ ໒໐:໑໙,໒໐,໒໗-໒໙)

"ເຮົາໄດ້ຕາຍແລ້ວ ແຕ່ເບິ່ງແມ, ເຮົາກໍມີຊີວິດຢູ່ຕລອດໄປເປັນນິດ ແລະເຮົາຖືລູກກະແຈແຫ່ງຄວາມຕາຍແລະແຫ່ງແດນມໍຣະນາ!"

(ພຣະນິມິດ ບົດ ທີ ໑:໑໘)

ເຮົາຈະໃຫ້ໃຈໃຫມ່ແກ່ເຈົ້າແລະເຮົາຈະບັນຈຸຈິດວິນຍານໃຫມ່ໄວ້ໃນເຈົ້າ ເຮົາຈະນຳໃຈຫີນອອກໄປເສັຽຈາກເນື້ອຂອງເຈົ້າ ແລະໃຫ້ໃຈເນື້ອແກ່ເຈົ້າ

ແລະເຮົາຈະໃສ່ວິນຍານຂອງເຮົາພາຍໃນເຈົ້າ ແລະເຮັດໃຫ້ເຈົ້າດຳເນີນຕາມບັນຍັດຂອງເຮົາ ແລະໃຫ້ຮັກສາກົດຫມາຍຂອງເຮົາແລະເຮັດຕາມ

(ເຢຊະກີເອັນ ບົດ ທີ ໓໖:໒໗, ໒໗)

"ຝ່າຍເຮົາຈະທູນຂໍພຣະບິດາແລະພຣະອົງຈະຊົງປະທານຜູ້ຊ່ອຍອີກຜູ້ນຶ່ງ ໃຫ້ແກ່ພວກທ່ານ ເພື່ອຈະຢູ່ກັບພວກທ່ານຕລອດໄປເປັນນິດ

ຄືພຣະວິນຍານແຫ່ງຄວາມຈິງ ຊຶ່ງໂລກບໍ່ອາດຈະຮັບໄດ້ເພາະໂລກບໍ່ເຫັນແລະບໍ່ຮູ້ຈັກພຣະອົງ ແຕ່ທ່ານທັງຫລາຍຮູ້ຈັກພຣະອົງ ເພາະພຣະອົງຊົງສະຖິດຢູ່ກັບພວກທ່ານ ແລະຈະປະທັບພາຍໃນພວກທ່ານ ເຮົາຈະບໍ່ປະຖິ້ມທ່ານທັງຫລາຍໄວ້ເປັນລູກກຳພ້າ ເຮົາຈະມາຫາພວກທ່ານອີກຫນ້ອຍນຶ່ງໂລກກໍຈະບໍ່ເຫັນເຮົາ

ແຕ່ພວກທ່ານຈະເຫັນເຮົາ ເພາະເຮົາເປັນຢູ່ ທ່ານທັງຫລາຍກໍຈະເປັນຢູ່ເຫມືອນກັນ

ໃນວັນນັ້ນທ່ານຈະຮູ້ວ່າເຮົາຢູ່ໃນພຣະບິດາຂອງເຮົາ ແລະພວກທ່ານຢູ່ໃນເຮົາ ແລະເຮົາຢູ່ໃນພວກທ່ານ

ຜູ້ທີ່ມີຂໍ້ບັນຍັດຂອງເຮົາແລະຖືຂໍ້ບັນຍັດນັ້ນ ຜູ້ນັ້ນແຫຼະ, ເປັນຜູ້ທີ່ເຮົາຮັກ
ແລະຜູ້ທີ່ຮັກເຮົາພຣະບິດາຂອງເຮົາຈະຊົງຮັກຜູ້ ນັ້ນ ແລະຝ່າຍເຮົາຈະຮັກ
ຜູ້ນັ້ນ ພ້ອມທັງຈະສະແດງຕົວເຮົາໃຫ້ແກ່ຜູ້ນັ້ນ"

ຢູດາ ບໍ່ແມ່ນຢູດາອິສກາຣີອົດ ທູນພຣະອົງວ່າ, "ນາຍເຈົ້າເອີຍ
ເປັນດ້ວຍເຫດໃດທ່ານຈຶ່ງສະແດງຕົວໃຫ້ປາກົດແກ່ພວກຂ້ານ້ອຍ
ແຕ່ບໍ່ໃຫ້ປາກົດແກ່ໂລກ"

ພຣະເຢຊູຊົງຕອບວ່າ, "ຖ້າຜູ້ໃດຮັກເຮົາ ຜູ້ນັ້ນຈະຖືຮັກສາພຣະທັມຂອງເຮົາ
ແລະພຣະບິດາຂອງເຮົາຈະຊົງຮັກຜູ້ນັ້ນ ແລ້ວເຮົາທັງຫຼາຍຈະມາຫາຜູ້ນັ້ນ
ແລະຈະຕັ້ງຢູ່ກັບຜູ້ນັ້ນ

ຜູ້ທີ່ບໍ່ຮັກເຮົາ ກໍບໍ່ຖືຮັກສາຖ້ອຍຄຳທັງຫຼາຍຂອງເຮົາ ພຣະທັມທີ່ທ່ານ
ທັງຫຼາຍໄດ້ຍິນນັ້ນບໍ່ແມ່ນຂອງເຮົາ ແຕ່ແມ່ນຂອງພຣະບິດາຜູ້ຊົງໃຊ້
ເຮົາມາ

ຂໍ້ຄວາມເຫຼົ່ານີ້ເຮົາໄດ້ກ່າວຕໍ່ທ່ານທັງຫຼາຍ ເມື່ອເຮົາຍັງຢູ່ກັບພວກທ່ານ

ແຕ່ພຣະຜູ້ຊ່ອຍນັ້ນ ຄືພຣະວິນຍານບໍຣິສຸດທີ່ພຣະບິດາຈະຊົງໃຊ້ມາໃນ
ນາມຂອງເຮົາ ພຣະອົງນັ້ນແຫຼະ, ຈະສອນທ່ານທັງຫຼາຍທຸກສິ່ງ ແລະ
ຈະເຕືອນພວກທ່ານໃຫ້ລະນຶກເຖິງທຸກສິ່ງທີ່ເຮົາໄດ້ກ່າວແກ່ພວກ
ທ່ານແລ້ວນັ້ນ".

(ໂຍຮັນ ບົດ ທີ ໑໔:໑໗-໒໗)

ເບິ່ງແມ, ອັນທີ່ພຣະບິດາຂອງເຮົາໄດ້ຊົງສັນຍາໄວ້ນັ້ນ ເຮົາກໍໃຊ້ມາເຖິງທ່ານທັງຫລາຍ ແຕ່ຝ່າຍພວກທ່ານຈົ່ງຄອຍຢູ່ໃນກຸງຈົນກວ່າພວກທ່ານຈະໄດ້ປະກອບດ້ວຍຣິດເດດທີ່ມາຈາກເບື້ອງເທິງ."

(ລູກາ ບົດ ທີ ໒໔:໔໙)

> ເມື່ອຄົບຮອບວັນເທສການເພັນເຕຄໍສະເຕ ເຂົາທັງໝົດໄດ້ພ້ອມກັນຢູ່ໃນບ່ອນດຽວ

ໃນທັນໃດນັ້ນເກີດມີສຽງມາຈາກຟ້າເໝືອນສຽງລົມພະຍຸກ້າ ກ້ອງສນັ່ນທົ່ວເຮືອນທີ່ເຂົານັ່ງຢູ່ນັ້ນ

> ມີລີ້ນເປັນຮູບເໝືອນແປວໄຟໄດ້ປາກົດໃຫ້ເຂົາເຫັນ ແລະລີ້ນແຕກກະຈາຍອອກໄປຢູ່ເທິງເຂົາທຸກຄົນຜູ້ລະລີ້ນ

ເຂົາເຫຼົ່ານັ້ນກໍເຕັມໄປດ້ວຍພຣະວິນຍານບໍຣິສຸດ ແລະຕັ້ງຕົ້ນປາກພາສາຕ່າງ ໆ ຕາມທີ່ພຣະວິນຍານຊົງໂຜດໃຫ້ເຂົາເວົ້ານັ້ນ

> ຂນະນັ້ນ ມີຊາດຢິວທີ່ຢຳເກງພຣະເຈົ້າມາຈາກທຸກປະເທດທົ່ວໃຕ້ຟ້າ ເຂົ້າມາພັກເຊົາຢູ່ໃນກຸງເຢຣູຊາເລັມ

ເມື່ອສຽງນັ້ນໄດ້ເກີດຂື້ນຝູງຄົນຫລວງຫລາຍໄດ້ມາໂຮມກັນ ແລ້ວສງົບສົນເທ ເພາະຕ່າງຄົນຕ່າງໄດ້ຍິນພວກເຫຼົ່ານັ້ນເວົ້າພາສາຂອງໃຜລາວ

ຄົນທັງປວງຈຶ່ງປລາດແລະງຶດອັສຈັນໃຈເວົ້າກັນວ່າ, "ເບິ່ງແມ, ຄົນທັງຫຼາຍທີ່ເວົ້າກັນຢູ່ນັ້ນແມ່ນຊາວຄາລິເລທັງຫມົດ ບໍ່ແມ່ນຫຼື ເປັນແນວໃດພວກເຮົາທຸກຄົນຈຶ່ງໄດ້ຍິນເຂົາເວົ້າພາສາບ້ານເກີດເມືອງນອນຂອງພວກເຮົາ"

ແລ້ວເປໂຕໄດ້ຢືນຂຶ້ນກັບອັຄສາວົກສິບເອັດຄົນນັ້ນ ແລະໄດ້ກ່າວຄຳປາສັຍດ້ວຍສຽງດັງໃຫ້ເຂົາຟັງວ່າ, "ທ່ານຊາວຢິວແລະບັນດາຄົນທີ່ຢູ່ໃນກຸງເຢຣູຊາເລັມເອີຍ, ຈົ່ງຊາບເຣື່ອງນີ້ແລະຕັ້ງຫູຟັງຖ້ອຍຄຳຂອງຂ້າພະເຈົ້າ

ດ້ວຍວ່າຄົນເຫຼົ່ານີ້ບໍ່ໄດ້ເມົາເຫຼົ້າເຫມືອນດັ່ງພວກທ່ານຄຶດນັ້ນ ເພາະວ່າເປັນແຕ່ສາມໂມງເຊົ້າຢູ່

ແຕ່ການນີ້ແຫຼະ, ແມ່ນຕາມທີ່ໄດ້ຊົງກ່າວດ້ວຍໂຢເອັນຜູ້ປະກາດພຣະທັມວ່າ,

'ພຣະເຈົ້າຊົງກ່າວວ່າ ໃນຄາວສຸດທ້າຍເຮົາຈະຖອກວິນຍານຂອງເຮົາປະທານລົງໃສ່ມະນຸດທັງປວງ ລູກຊາຍແລະລູກຍິງຂອງພວກທ່ານຈະທຳນວາຍ ຊາຍຫນຸ່ມຂອງພວກທ່ານຈະເຫັນນິມິດ ແລະຊາຍເຖົ້າຂອງພວກທ່ານຈະຝັນເຫັນ'."

ຝ່າຍເຮົາໃນຄາວນັ້ນເຮົາຈະຖອກວິນຍານຂອງເຮົາປະທານລົງໃສ່ຂ້າໃຊ້ຊາຍຍິງຂອງເຮົາ ແລະເຂົາຈະທຳນວາຍ'."

(ກິຈການ ບົດ ທີ ໒:໗-໘, ໑໔-໑໘)

ດັ່ງນີ້ແຫຼະ ພີ່ນ້ອງທີ່ຮັກຂອງເຮົາເອີຍ, ເຈົ້າທັງຫຼາຍຈົ່ງຕັ້ງຫມັ້ນຢູ່ ຢ່າຫວັ່ນໄຫວ ຈົ່ງປະຕິບັດງານຂອງອົງພຣະຜູ້ເປັນເຈົ້າ ໃຫ້ບໍຣິບູນທຸກເວລາ ດ້ວຍຮູ້ວ່າໃນອົງພຣະຜູ້ເປັນເຈົ້າ ການຂອງພວກເຈົ້ານັ້ນຈະບໍ່ໄຮ້ປໂຍດ.

(໑ໂກຣິນໂທ ບົດ ທີ ໑໕:໕໘)

> ເຫດນັ້ນເຮົາຕັ້ງເປົ້າຫມາຍຂອງເຮົາວ່າ ຖ້າເຮົາຢູ່ໃນເຮືອນຄືຮ່າງກາຍນີ້ ຫຼືບໍ່ຢູ່ກໍດີ ເຮົາກໍຈະພຍາຍາມເຮັດໃຫ້ເປັນທີ່ຊອບພຣະທັຍຂອງພຣະອົງ

(໒ໂກຣິນໂທ ບົດ ທີ ໕:໙)

ໂດຍບໍ່ໄດ້ຢຸດຢັ້ງໃນການລະນຶກເຖິງກິຈການຂອງເຈົ້າທັງຫຼາຍ ອັນເກີດມາຈາກຄວາມເຊື່ອກັບທັງການງານ ອັນຫນັກຫນ່ວງທີ່ພວກເຈົ້າຍອມເຮັດຍ້ອນຄວາມຮັກ ແລະຄວາມຫມັ້ນພຽນ ອັນມີມາຈາກຄວາມໄວ້ວາງໃຈໃນພຣະເຢຊູຄຣິດເຈົ້າຂອງພວກເຮົາ.

(໑ ເທຊະໂລນິກ ບົດ ທີ ໑:໓)

> ດ້ວຍວ່າຄວາມຮັກຂອງພຣະຄຣິດຊົງບັງຄັບເຮົາຢູ່ ເພາະເຮົາໄດ້ຄິດເຫັນຢ່າງນີ້ວ່າມີຜູ້ນຶ່ງໄດ້ຕາຍແທນຄົນທັງປວງ ເຫດດັ່ງນັ້ນຄົນທັງປວງນັ້ນຈຶ່ງໄດ້ເຂົ້າຮ່ວມໃນຄວາມຕາຍນັ້ນ

ແລະພຣະອົງນັ້ນໄດ້ຊົງວາຍພຣະຊົນແທນຄົນທັງປວງ ເພື່ອຄົນທັງຫຼາຍຜູ້ທີ່ມີຊີວິດຢູ່ນັ້ນ ຈະບໍ່ໄດ້ມີຊີວິດເພື່ອປໂຍດແກ່ຕົວເອງອີກຕໍ່ໄປ ແຕ່ຈະມີຊີວິດຢູ່ເພື່ອພຣະອົງຜູ້ຊົງສິ້ນພຣະຊົນ ແລະໄດ້ຊົງຖືກບັນດານໃຫ້ຄືນພຣະຊົນເພາະເຫັນແກ່ເຂົາ

ເຫດສັນນັ້ນເຮົາຈຶ່ງເປັນທູດຂອງພຣະຄຣິດ ໂດຍທີ່ພຣະເຈົ້າຊົງຂໍຮ້ອງ
ເຈົ້າທັງຫລາຍທາງເຮົາ ເຮົາຈຶ່ງຂໍຮ້ອງພວກເຈົ້າໃນນາມຂອງພຣະ
ຄຣິດວ່າ, "ຈົ່ງຍອມໃຫ້ພຣະເຈົ້າຊົງກະທຳໃຫ້ເຈົ້າຄືນດີກັນກັບພຣະອົງ
ເທີນ".

(໒ ໂກຣິນໂທ ບົດ ທີ ໕:໑໘, ໑໙; ໒໐)

ຜູ້ປູກກັບຜູ້ຫົດນ້ຳກໍສເມີກັນ ແຕ່ທຸກຄົນກໍຈະໄດ້ຮັບຮາງວັນຕາມການຂອງຕົນ

ເພາະວ່າເຮົາທັງຫລາຍເປັນຜູ້ຮ່ວມກັນທຳງານຂອງພຣະເຈົ້າ ພວກເຈົ້າ
ເປັນໄຮ່ນາຂອງພຣະເຈົ້າ

ເຈົ້າທັງຫລາຍເປັນຕຶກຂອງພຣະອົງ ໂດຍພຣະຄຸນຂອງພຣະເຈົ້າທີ່ຊົງໂຜດ
ປະທານແກ່ເຮົາແລ້ວ ເຮົາໄດ້ວາງຮາກລົງເໝືອນນາຍຊ່າງຜູ້ຊຳນານ
ແລະຄົນອື່ນກໍມາກໍ່ຂຶ້ນ ແຕ່ທຸກຄົນຈົ່ງລະວັງໃຫ້ດີວ່າຈະກໍ່ຂຶ້ນຢ່າງໃດ

ເພາະວ່າຜູ້ໃດຈະວາງຮາກອື່ນອີກບໍ່ໄດ້ ນອກຈາກຮາກທີ່ຊົງວາງໄວ້
ແລ້ວນັ້ນຄືພຣະເຢຊູຄຣິດ

ຖ້າຜູ້ໃດຈະເອົາຄຳ, ເອົາເງິນ, ເອົາເພັດພອຍ, ເອົາໄມ້, ເອົາຫຍ້າ
ແຫ້ງ, ເອົາເຟືອງກໍດີ, ມາກໍ່ເທິງຮາກນັ້ນ

ການຂອງທຸກຄົນກໍຈະໄດ້ປາກົດແຈ້ງ ດ້ວຍວ່າເວລາວັນນັ້ນຈະໃຫ້
ເຫັນໄດ້ແຈ່ມແຈ້ງ ເພາະຈະເຫັນແຈ່ມແຈ້ງໄດ້ດ້ວຍໄຟ ໄຟນັ້ນຈະ
ທົດລອງເບິ່ງວ່າການຂອງທຸກຄົນນັ້ນເປັນຢ່າງໃດ

ຖ້າການງານຂອງຜູ້ໃດທີ່ກໍ່ຂຶ້ນທົນຢູ່ໄດ້ ຜູ້ນັ້ນກໍຈະໄດ້ຮາງວັນ

ຖ້າການງານຂອງຜູ້ໃດຖືກເຜົາໄໝ້ເສັຽ ຜູ້ນັ້ນຈະຂາດຣາງວັນ ແຕ່ຕົນເອງກໍຈະໄດ້ພົ້ນ ແຕ່ເໝືອນຜ່ານພົ້ນໄຟ.

(໑ ໂກຣິນໂທ ບົດ ທີ ໓:໑໔-໑໕)



ໂປໂລເປັນອັຄສາວົກຂອງພຣະເຢຊູຄຣິດ ຕາມນ້ຳພຣະທັຍຂອງພຣະເຈົ້າ ຮຽນພວກໄພ່ພົນຂອງພຣະເຈົ້າ ຜູ້ທີ່ເຫລື້ອມໃສສັດທາໃນພຣະເຢຊູຄຣິດ

ຂໍໃຫ້ພຣະຄຸນແລະສັນຕິສຸກຊຶ່ງມາຈາກພຣະຄຣິດເຈົ້າຂອງເຮົາທັງຫຼາຍ ແລະຈາກພຣະອົງເຈົ້າເຢຊູຄຣິດສະຖິດຢູ່ກັບທ່ານທັງຫຼາຍເທີນ

ສາທຸການແດ່ພຣະເຈົ້າ ຄືພຣະບິດາຂອງພຣະເຢຊູຄຣິດເຈົ້າຂອງເຮົາທັງຫຼາຍ ຜູ້ໄດ້ຊົງໂຜດປະທານພຣະພອນທຸກປະການຝ່າຍວິນຍານ ໃຫ້ແກ່ເຮົາທັງຫຼາຍໃນສວັນສະຖານໂດຍພຣະຄຣິດ

ໃນພຣະຄຣິດນັ້ນ ພຣະອົງໄດ້ຊົງເລືອກພວກເຮົາໄວ້ຕັ້ງແຕ່ກ່ອນທີ່ຈະຊົງວາງຮາກສ້າງໂລກ ເພື່ອເຮົາທັງຫຼາຍຈະບໍຣິສຸດໂດຍບໍ່ມີຂໍ້ຕິຕຽນໄດ້ຕໍ່ພຣະພັກພຣະອົງ

ພຣະອົງໄດ້ຊົງກາດໝາຍພວກເຮົາໄວ້ກ່ອນດ້ວຍຄວາມຮັກ ໃຫ້ເປັນບຸດຂອງພຣະອົງໂດຍພຣະເຢຊູຄຣິດຕາມທີ່ຊອບພຣະທັຍພຣະອົງ

ເພື່ອຈະໃຫ້ເປັນທີ່ສັຣເສີນພຣະຄຸນອັນຮຸ່ງເຮືອງຂອງພຣະອົງ ຊຶ່ງຊົງໂຜດປະທານແກ່ພວກເຮົາໃນພຣະເຢຊູຄຣິດ ຜູ້ຊົງເປັນທີ່ຮັກຂອງພຣະເຈົ້າ

ນີໂກເດມທູນພຣະອົງວ່າ, "ເຫດການເຫຼົ່ານີ້ຈະບັງເກີດຂຶ້ນໄດ້ຢ່າງໃດ"

> ພຣະເຢຊູຊົງຕອບວ່າ, "ທ່ານເປັນອາຈານຂອງພວກອິສຣາເອັນ
> ແລະຍັງບໍ່ຮູ້ຈັກສິ່ງເຫຼົ່ານີ້ຫຼື

ເຮົາບອກຄວາມຈິງແກ່ທ່ານວ່າ ພວກເຮົາເວົ້າສິ່ງທີ່ເຮົາຮູ້ແລະເປັນພະຍານເຖິງສິ່ງທີ່ພວກເຮົາໄດ້ເຫັນ ແຕ່ທ່ານທັງຫຼາຍບໍ່ໄດ້ຮັບຄຳພະຍານຂອງເຮົາ

> ຖ້າເຮົາບອກທ່ານທັງຫຼາຍເຖິງສິ່ງຝ່າຍໂລກແລະທ່ານບໍ່ເຊື່ອ ຖ້າເຮົາ
> ບອກທ່ານເຖິງສິ່ງຝ່າຍສວັນ ທ່ານຈະເຊື່ອໄດ້ຢ່າງໃດ

ບໍ່ມີຜູ້ໃດຂຶ້ນໄປສູ່ສວັນ ນອກຈາກຜູ້ທີ່ລົງມາຈາກສວັນຄືບຸດມະນຸດ

> ໂມເຊໄດ້ຍົກງູຂຶ້ນໃນປ່າສັນໃດ ບຸດມະນຸດຈະຕ້ອງຍົກຂຶ້ນສັນນັ້ນ

ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະອົງຈະມີຊີວິດອັນຕລອດໄປເປັນນິດ

> ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງ
> ພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ
> ແຕ່ມີຊີວິດອັນຕລອດໄປເປັນນິດ.

(ໂຢຮັນ ບົດ ທີ ໓:໑-໑໗)

ມົກຜົ ## ການຖວາຍຕົວ 376

ເຫດສັນນັ້ນພີ່ນ້ອງທັງຫຼາຍເອີຍ ໂດຍເຫັນແກ່ພຣະເມດຕາກະຣຸນາຂອງພຣະເຈົ້າ ເຮົາຈຶ່ງຊັກຊວນພວກເຈົ້າໃຫ້ຖວາຍຕົວແກ່ພຣະອົງເພື່ອເປັນເຄື່ອງບູຊາທີ່ມີຊີວິດ, ເປັນອັນບໍຣິສຸດ, ແລະເປັນທີ່ຊອບພຣະທັຍພຣະເຈົ້າ ຊຶ່ງເປັນການນະມັສການທີ່ສົມກັບຝ່າຍວິນຍານຂອງເຈົ້າທັງຫຼາຍ

ຢ່າດຳເນີນຊີວິດເໝືອນຢ່າງຊາວໂລກນີ້ ແຕ່ຈົ່ງຮັບການຊົງປ່ຽນແປງຈິດໃຈ ແລ້ວຊຸປນິສັຍຂອງພວກເຈົ້າຈຶ່ງຈະປ່ຽນໃໝ່ ເພື່ອເຈົ້າທັງຫຼາຍຈະໄດ້ຮູ້ນ້ຳພຣະທັຍຂອງພຣະເຈົ້າ ຈະໄດ້ຮູ້ວ່າອັນໃດດີ, ອັນໃດເປັນທີ່ຊອບພຣະທັຍ, ແລະອັນໃດດີທີ່ສຸດ.

(ໂຣມ ບົດ ທີ ໑໒:໑, ໒)

ຖ້າເຈົ້າທັງຫຼາຍຮັບການຊົງບັນດານໃຫ້ຄືນມາດ້ວຍກັນກັບພຣະຄຣິດແລ້ວ ກໍຈົ່ງສແວງຫາສິ່ງຊຶ່ງຢູ່ເບື້ອງເທິງ

ຈົ່ງເອົາໃຈໃສ່ສິ່ງທີ່ຢູ່ເບື້ອງເທິງ ບໍ່ໃຊ່ສິ່ງຊຶ່ງຢູ່ທີ່ແຜ່ນດິນໂລກ

ເພາະວ່າເຈົ້າທັງຫຼາຍໄດ້ຕາຍແລ້ວ ແລະຊີວິດຂອງພວກເຈົ້າກໍຊົງບັງໄວ້ດ້ວຍກັນກັບພຣະຄຣິດໃນພຣະເຈົ້າ

ເມື່ອໃດພຣະຄຣິດ ຜູ້ຊົງເປັນຊີວິດທີ່ແທ້ຈິງຂອງເຮົາທັງຫຼາຍຊົງປາກົດ ເມື່ອນັ້ນເຈົ້າທັງຫຼາຍກໍຈະປາກົດພ້ອມກັນກັບພຣະອົງໃນສະງ່າຣາສີເໝືອນກັນ

ເຫດສັນນັ້ນໃນຖານະທີ່ເປັນພວກຊຶ່ງພຣະເຈົ້າຊົງຮັກ ແລະຊົງເລືອກໄວ້ໃຫ້ເປັນໄພ່ພົນຂອງພຣະອົງ ຈົ່ງສວມໃຈເມດຕາ, ໃຈປານີ, ໃຈຖ່ອມລົງ, ໃຈອ່ອນສຸພາບ, ໃຈອົດທົນດົນນານ

ຈົ່ງຜ່ອນໜັກຜ່ອນເບົາເຊິ່ງກັນແລະກັນ ແລະຖ້າແມ່ນຜູ້ໃດມີເຣື່ອງຕໍ່ກັນກໍຈົ່ງຍົກໂທດໃຫ້ກັນແລະກັນ ອົງພຣະຜູ້ເປັນເຈົ້າໄດ້ຊົງໂຜດຍົກໂທດໃຫ້ເຈົ້າທັງຫຼາຍສັນໃດ ພວກເຈົ້າກໍຈົ່ງຍົກໂທດໃຫ້ກັນແລະກັນສັນນັ້ນ

ແລ້ວນອກຈາກສິ່ງທັງປວງນີ້ ຈົ່ງເອົາຄວາມຮັກທີ່ເປັນສາຍຜູກມັດທຸກສິ່ງໄວ້ໃຫ້ເຖິງຄວາມຄົບຖ້ວນ

> ແລະຈົ່ງໃຫ້ສັນຕິສຸກທີ່ມາຈາກພຣະຄຣິດຄຸ້ມຄອງຈິດໃຈຂອງເຈົ້າທັງຫຼາຍ ພຣະເຈົ້າໄດ້ຊົງເອີ້ນເຈົ້າທັງຫຼາຍໄວ້ໃຫ້ເປັນກາຍອັນດຽວ ກໍເພື່ອສັນຕິສຸກນັ້ນ ແລະພວກເຈົ້າຈົ່ງມີໃຈກະຕັນຍູ

ຈົ່ງໃຫ້ພຣະທັມຂອງພຣະຄຣິດສະຖິດຢູ່ໃນໃຈຂອງພວກເຈົ້າຢ່າງບໍຣິບູນ ຈົ່ງສັ່ງສອນແລະເຕືອນສະຕິກັນແລະກັນດ້ວຍປັນຍາທຸກຢ່າງ ຈົ່ງຮ້ອງເພງດ້ວຍເພງສັຣເສີນ, ເພງນະມັສການ, ແລະເພງຍົກຍໍສັຣະເສີນຝ່າຍພຣະວິນຍານ ຄືຈົ່ງຮ້ອງເພງຖວາຍແດ່ພຣະເຈົ້າດ້ວຍໃຈໂມທະນາພຣະຄຸນ

> ແລະເມື່ອເຈົ້າທັງຫຼາຍຈະເຮັດສິ່ງໃດ ດ້ວຍວາຈາຫຼືດ້ວຍການກະທຳກໍຕາມ ຈົ່ງເຮັດທຸກສິ່ງໃນພຣະນາມຂອງພຣະເຢຊູເຈົ້າ ແລະຂອບພຣະຄຸນພຣະບິດາເຈົ້າໂດຍພຣະອົງນັ້ນ.

( ໂກໂລດ ບົດ ທີ ໓:໑-໔, ໑໔-໑໗)



ຝ່າຍເປໂຕຈຶ່ງກ່າວແກ່ເຂົາວ່າ, "ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະຮັບສິນບັບຕິສະມາໃນພຣະນາມຂອງພຣະເຢຊູຄຣິດທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານ ແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານ ຄືພຣະວິນຍານບໍຣິສຸດ

ດ້ວຍວ່າພຣະສັນຍານັ້ນກໍມີໄວ້ແກ່ທ່ານທັງຫຼາຍກັບລູກຫຼານຂອງພວກທ່ານ ແລະແກ່ຄົນທັງປວງທີ່ຢູ່ຫ່າງໄກ ຄືແກ່ຄົນທີ່ອົງພຣະຜູ້ເປັນເຈົ້າ, ພຣະເຈົ້າຂອງພວກເຮົາຊົງເອີ້ນມາເຝົ້າພຣະອົງນັ້ນ"

ແລະເປໂຕໄດ້ກ່າວສັ່ງເຂົາຫຼາຍປະການອີກແລະເຕືອນສະຕິເຂົາວ່າ, "ຈົ່ງເອົາຕົວລອດພົ້ນຈາກເຊື້ອຊາດອັນຄົດລ້ຽວນີ້ເສັຽ"

ຝ່າຍຄົນທັງຫຼາຍທີ່ໄດ້ຮັບເຊື່ອຟັງຖ້ອຍຄຳຂອງເປໂຕກໍໄດ້ຮັບບັບຕິສະມາໃນວັນນັ້ນມີຄົນອື່ນເຂົ້າເປັນລູກສິດປະມານສາມພັນຄົນ

ແລະເຂົາໄດ້ຕັ້ງໝັ້ນຄົງຢູ່ໃນຄຳສອນຂອງພວກອັຄສາວົກ, ໃນການຮ່ວມໃຈກັນ, ໃນການຫັກເຂົ້າຈີ່, ແລະໃນການໄຫວ້ວອນ

ທຸກຄົນເກີດມີຄວາມຢ້ານຢຳນັບຖື ສ່ວນພວກອັຄສາວົກກໍໄດ້ເຮັດການອັສຈັນແລະໝາຍສຳຄັນຫຼາຍປະການ

ບັນດາຜູ້ທີ່ເຊື່ອຖືນັ້ນກໍໄດ້ຢູ່ຮ່ວມກັນ ແລະຊັບສິ່ງຂອງຂອງເຂົາເຫຼົ່ານັ້ນເຂົາກໍຖືເປັນຂອງສ່ວນຮວມ

ແລະເຂົາໄດ້ຂາຍທີ່ດິນແລະຊັບສິ່ງຂອງມາແຈກຢາຍໃຫ້ຄົນທັງປວງຕາມທີ່ທຸກຄົນຕ້ອງການ

ເຂົາໄດ້ໝັ່ນຮ່ວມປະຊຸມໃນບໍຣິເວນພຣະວິຫານທຸກວັນ ແລະຫັກເຂົ້າຈີ່ຕາມເຮືອນຂອງເຂົາ ຮ່ວມຮັບປະທານອາຫານດ້ວຍຄວາມຊົມຊື່ນຍິນດີແລະໃຈສັດຊື່

ທັງໄດ້ສັຣເສີນພຣະເຈົ້າ ແລະພົລເມືອງທັງໝົດກໍຊອບໃຈນຳ ຝ່າຍອົງພຣະຜູ້ເປັນເຈົ້າ ໄດ້ຊົງໂຜດໃຫ້ຄົນທັງຫຼາຍຊຶ່ງກຳລັງຈະລອດພົ້ນນັ້ນມາເຂົ້າກັບພວກສິດທຸກ ໆ ວັນ.

(ກິຈການ ບົດ ທີ ໒:໔໖-໔໗)

ສ່ວນຟີລິບໄດ້ລົງໄປຍັງເມືອງນຶ່ງທີ່ແຂວງຊາມາເຣັຽປະກາດເຣື່ອງພຣະຄຣິດ ໃຫ້ໄທເມືອງນັ້ນຟັງ

ເມື່ອຄົນທັງຫຼາຍໄດ້ຍິນແລະໄດ້ເຫັນໝາຍສຳຄັນທີ່ທ່ານກຳລັງເຫັນຢູ່ນັ້ນ ເຂົາກໍພອມໃຈກັນຟັງຖ້ອຍຄຳປະກາດຂອງທ່ານ

ດ້ວຍວ່າຜີຖ່ອຍຮ້າຍທີ່ສິງຢູ່ໃນຫຼາຍຄົນໄດ້ຮ້ອງດ້ວຍສຽງດັງ ແລະອອກມາຈາກຄົນເຫຼົ່ານັ້ນ ຄົນທີ່ເປັນງ່ອຍແລະຂາເສັ້ງຫຼາຍຄົນກໍໄດ້ດີເປັນປົກກະຕິ

ຈຶ່ງບັງເກີດມີຄວາມຍິນດີອັນໃຫຍ່ໃນເມືອງນັ້ນ.

(ກິຈການ ບົດ ທີ ໘:໕-໘)

## ມກ໘ ຄຳສັ່ງໃຫ້ປະກາດເຜີຍແຜ່ 378

ພີ່ນ້ອງທັງຫຼາຍເອີຍ, ຄວາມປາຖນາໃນຈິດໃຈຂອງເຮົາ ແລະຄຳອ້ອນວອນຕໍ່ພຣະເຈົ້າເພື່ອຊາວອິສຣາເອັນນັ້ນ ຄືຂໍເພື່ອໃຫ້ເຂົາພົ້ນ

ເຮົາເປັນພຍານໃຫ້ເຂົາວ່າ ເຂົາມີໃຈຮ້ອນຮົນທີ່ຈະປະຕິບັດພຣະເຈົ້າ ແຕ່ບໍ່ເປັນໄປຕາມຄວາມຮູ້ແລະສະຕິປັນຍາ

ດ້ວຍວ່າເຂົາບໍ່ຮູ້ຈັກຄວາມຊອບທັມທີ່ພຣະເຈົ້າຊົງປະທານໃຫ້ ແຕ່ໄດ້ພຍາຍາມ
ຕັ້ງຄວາມຊອບທັມຂອງຕົນເອງຂຶ້ນ ເຂົາຈຶ່ງບໍ່ຍອມຕົວຢູ່ໃຕ້ຄວາມຊອບທັມ
ທີ່ມາຈາກພຣະເຈົ້າ

ເພາະວ່າພຣະຄຣິດຊົງເປັນຜູ້ເຮັດໃຫ້ພຣະບັນຍັດຖືກຍົກເລີກ ເພື່ອ
ໃຫ້ທຸກຄົນທີ່ເຊື່ອໄດ້ຊົງຖືວ່າເປັນຄົນຊອບທັມ

ໂມເຊໄດ້ຂຽນເຣື່ອງຄວາມຊອບທັມຊຶ່ງມີພຣະບັນຍັດເປັນຫຼັກວ່າ, "ຄົນໃດທີ່
ປະຕິບັດຕາມກິຈະໄດ້ຊີວິດດ້ວຍການປະຕິບັດນັ້ນ"

ແຕ່ຄວາມຊອບທັມຊຶ່ງມີຄວາມເຊື່ອເປັນຫຼັກກ່າວໄວ້ຢ່າງນີ້ວ່າ, "ຢ່າ
ນຶກໃນໃຈຂອງຕົວວ່າ 'ໃຜຈະຂຶ້ນເມືອຟ້າສວັນ'"
(ຄືຈະນຳພຣະຄຣິດລົງມາ)

